ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 072 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 16 / 11 / 17

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການຜັງເມືອງ (ສະບັບປັບປຸງ)

---

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການຜັງເມືອງ (ສະບັບປັບປຸງ) ໃນວາລະກອງປະຊຸມຕອນເຊົ້າຂອງ ວັນທີ 16 ພະຈິກ 2017.

### ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການຜັງເມືອງ (ສະບັບປັບປຸງ) ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 327 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 26 ທັນວາ 2017

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

### ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍການຜັງເມືອງ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 072/ສພຊ, ລົງວັນທີ 16 ພະຈິກ 2017 ກ່ຽວກັບການຮັບຮອງເອົາກົດໝາຍ ວ່າດ້ວຍການຜັງເມືອງ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 036/ຄປຈ, ລົງວັນທີ 13 ທັນວາ 2017.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍ ວ່າດ້ວຍການຜັງເມືອງ (ສະບັບປັບປຸງ).

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 40 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 16 ພະຈິກ 2017

# ກົດໝາຍ
# ວ່າດ້ວຍການຜັງເມືອງ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ການຕິດຕາມ ການກວດກາ ການຜັງເມືອງ ເພື່ອໃຫ້ມີຄວາມຖືກຕ້ອງ, ເປັນລະບົບ ແລະ ມີປະສິດທິຜົນ ແນໃສ່ຮັບປະກັນການວາງແຜນ ແລະ ການພັດທະນາຕົວເມືອງ ໃຫ້ມີຄວາມສົມດູນ, ຄວາມສະດວກ, ສະຫງົບ, ປອດໄພມີສຸຂານາໄມ, ສວຍງາມເປັນລະບຽບຮຽບຮ້ອຍ, ມີຄວາມສີວິໄລ ພ້ອມທັງປົກປັກຮັກສາສະຖາປັດຕະຍະກຳ, ບູຮານນະສະຖານ, ມໍລະດົກທາງດ້ານວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ ລວມທັງລະບົບນິເວດວິທະຍາ, ສິ່ງແວດລ້ອມ ທາງດ້ານທຳມະຊາດ ແລະ ສັງຄົມ, ເຊື່ອມໂຍງກັນຢ່າງເປັນລະບົບຄົບຊຸດ ຕອບສະໜອງຄວາມຮຽກຮ້ອງຕ້ອງການ ໃນການພັດທະນາຕົວເມືອງ ແລະ ຊຸມນະບົດຕິດພັນກັບການຍົກລະດັບຄຸນນະພາບຊີວິດ ແລະ ການເຄື່ອນໄຫວຂອງສັງຄົມ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

**ມາດຕາ 2 (ປັບປຸງ) ການຜັງເມືອງ**

ການຜັງເມືອງ ແມ່ນ ຂະບວນການສຳຫຼວດ, ອອກແບບ ແລະ ວາງແຜນຜັງຕົວເມືອງ ໃຫ້ຖືກຕ້ອງຕາມມາດຕະຖານທາງດ້ານບໍລິຫານ, ເຕັກນິກ, ວິທະຍາສາດ, ເສດຖະກິດ-ສັງຄົມ, ວັດທະນະທຳ ແລະ ການປົກປັກຮັກສາສິ່ງແວດລ້ອມ ລວມທັງການຄວບຄຸມການພັດທະນາຕົວເມືອງ ແລະ ການກໍ່ສ້າງໃຫ້ສອດຄ່ອງກັບແຜນຜັງຕົວເມືອງ ທີ່ຖືກຮັບຮອງ.

**ມາດຕາ 3 (ໃໝ່) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຕົວເມືອງ** ໝາຍເຖິງ ພື້ນທີ່ທີ່ມີປະຊາກອນ ດຳລົງຊີວິດໜາແໜ້ນ ປະກອບອາຊີບຢູ່ໃນຂົງເຂດອຸດສາຫະກຳ, ການຄ້າ ແລະ ການບໍລິການເປັນສ່ວນຫຼາຍ ແລະ ມີໂຄງລ່າງພື້ນຖານທາງດ້ານເຕັກນິກ, ເສດຖະກິດ-ສັງຄົມ;

2. **ພູມີທັດຂອງຕົວເມືອງ** ໝາຍເຖິງ ພາບລວມທີ່ສ່ອງແສງເຖິງການດຳລົງຊີວິດຂອງປະຊາຊົນໃນຕົວເມືອງ, ພັນລະນາເຖິງສິ່ງປຸກສ້າງ, ສິ່ງແວດລ້ອມທາງດ້ານທຳມະຊາດ ແລະ ສັງຄົມ;

3. **ສະຖາປັດຕະຍະກຳຕົວເມືອງ** ໝາຍເຖິງ ສິລະປະການອອກແບບຂອງສິ່ງປຸກສ້າງທີ່ສະແດງເຖິງລັກສະນະ, ສັດສ່ວນ, ວັດຖຸປະສົງ ແລະ ເປົ້າໝາຍການນຳໃຊ້ທີ່ມີການກົມກືນກັບພູມສັນຖານ ແລະ ສິ່ງແວດລ້ອມທາງດ້ານທຳມະຊາດ ແລະ ສັງຄົມຂອງຕົວເມືອງ;

4. **ແຜນທີ່ພູມສັນຖານຂອງຕົວເມືອງ** ໝາຍເຖິງ ການສະແດງລາຍລະອຽດຂອງຮູບຮ່າງໜ້າດິນ, ລະດັບສູງ, ທີ່ຕັ້ງບ້ານເຮືອນ, ແມ່ນ້ຳ, ຕາໜ່າງຄົມມະນາຄົມ, ວັດຖຸທຳມະຊາດ, ບູຮານນະສະຖານ ແລະ ສິ່ງປຸກສ້າງຕ່າງໆ ໃນຕົວເມືອງດ້ວຍລະບົບເຄື່ອງໝາຍຕາມມາດຕາສ່ວນ ແລະ ລະບົບເຄົ້າພິກັດໃດໜຶ່ງ ເທິງແຜ່ນພຽງ;

5. **ພື້ນແຜນທີ່** ໝາຍເຖິງ ການສະແດງຮູບຮ່າງພື້ນຜິວໂລກ ແລະ ວັດຖຸສິ່ງຂອງຕ່າງໆເທິງໜ້າດິນດ້ວຍລະບົບເຄື່ອງໝາຍ, ຄຳນວນຕາມມາດຕາສ່ວນ ແລະ ເຄົ້າພິກັດຊຶ່ງນຳໃຊ້ເປັນເຄື່ອງມືວາງແຜນຜັງຕົວເມືອງ;

6. **ທັດສະນີຍະພາບ** ໝາຍເຖິງ ຮູບທີ່ສະແດງໃຫ້ເຫັນມຸມໃດມຸມໜຶ່ງຂອງຕົວເມືອງ;

7. **ການບູລະນະ** ໝາຍເຖິງ ຂະບວນການສ້ອມແປງ, ຮັກສາຮູບແບບ, ລວດລາຍ ແລະ ລາຍລະອຽດເດີມຂອງອາຄານ, ສິ່ງກໍ່ສ້າງໃຫ້ຖືກຕ້ອງຕາມຍຸກສະໄໝທີ່ແນ່ນອນ ໂດຍຕໍ່ເຕີມ ແລະ ເສີມສ່ວນດັ້ງເດີມທີ່ຂາດຫາຍໄປໃຫ້ສົມບູນ;

8. **ການປະຕິສັງຂອນ** ໝາຍເຖິງ ການບູລະນະສ້າງຄືນໃໝ່ເພື່ອໃຫ້ວັດຖຸ ຫຼື ສິ່ງກໍ່ສ້າງດ້ານປະຫວັດສາດ, ວັດທະນະທຳ, ທັດສະນີຍະພາບທຳມະຊາດຄືນສູ່ສະພາບ ແລະ ເອກະລັກດັ້ງເດີມ;

9. **ເຂດປ້ອງກັນ** ໝາຍເຖິງ ເຂດທີ່ຢູ່ລະຫວ່າງເຂດສະເພາະ ແລະ ເຂດທົ່ວໄປ ເພື່ອຮັບປະກັນບໍ່ໃຫ້ມີການລ່ວງລ້ຳເຂົ້າໃນເຂດສະເພາະ, ທຳມະຊາດ, ເຂດກະສິກຳ, ປ່າໄມ້, ຫ້ວຍນ້ຳລຳເຊ, ທີ່ແບ່ງເຂດນຳໃຊ້ທີ່ດິນຕ່າງໆຂອງຕົວເມືອງ ເຊັ່ນ ເຂດອຸດສາຫະກຳກັບເຂດທີ່ພັກອາໄສ, ເຂດປົກປັກຮັກສາມໍລະດົກກັບເຂດພັດທະນາຕົວເມືອງ;

10. **ເສັ້ນແຖວປຸກສ້າງ** ໝາຍເຖິງ ເສັ້ນກຳນົດໄວ້ເພື່ອວາງທີ່ຕັ້ງດ້ານໜ້າຊັ້ນລຸ່ມຂອງອາຄານ ທີ່ຕິດກັບໜ້າດິນ ຊຶ່ງຂະໜານໄປຕາມລວງຍາວຂອງເຂດສະຫງວນຂອງເສັ້ນທາງ ຕາມທີ່ໄດ້ກຳນົດໄວ້ໃນແຜນຜັງເມືອງລະອຽດຂອງຕົວເມືອງ;

11. **ຄວາມສູງຂອງອາຄານ** ໝາຍເຖິງ ໄລຍະແຕ່ພື້ນຂອງຊັ້ນລຸ່ມສຸດທີ່ຕິດກັບໜ້າດິນ ຫາເພດານຊັ້ນສູງສຸດຂອງອາຄານ;

12. **ອັດຕາສ່ວນການນຳໃຊ້ທີ່ດິນປຸກສ້າງ** ໝາຍເຖິງ ຜົນຫານຂອງເນື້ອທີ່ອາຄານທີ່ຈະປຸກສ້າງ ຂອງຊັ້ນຕິດກັບໜ້າດິນໃຫ້ເນື້ອທີ່ຂອງຕອນດິນປຸກສ້າງທັງໝົດ ຊຶ່ງນຳໃຊ້ເປັນຕົວຊີ້ວັດເພື່ອຮັບປະກັນບໍ່ໃຫ້ມີຄວາມແອອັດຂອງສິ່ງກໍ່ສ້າງ, ໃຫ້ຊຸມຊົນມີຄວາມສະດວກ ແລະ ປອດໄພ;

13. **ສໍາປະສິດການນໍາໃຊ້ທີ່ດິນ** ໝາຍເຖິງ ຜົນຫານຂອງເນື້ອທີ່ອາຄານທັງໝົດທີ່ຈະປຸກສ້າງໃຫ້ເນື້ອທີ່ຂອງຕອນດິນທັງໝົດ ນໍາໃຊ້ເປັນຕົວຊີ້ວັດຄວບຄຸມຄວາມໜາແໜ້ນຂອງອາຄານຢູ່ໃນຕົວເມືອງ ໃຫ້ມີຄວາມເໝາະສົມ;

14. **ຊົນລະສາດ** ໝາຍເຖິງ ວິທະຍາສາດທີ່ສຶກສາກ່ຽວກັບຄຸນສົມບັດຂອງນໍ້າທາງດ້ານກົນລະສາດ, ກາຍຍະພາບ ແລະ ເຄມີສາດ;

15. **ເຈົ້າຂອງໂຄງການ** ໝາຍເຖິງ ອົງການຄຸ້ມຄອງການຜັງເມືອງ ທີ່ໄດ້ຮັບງົບປະມານການລົງທຶນຂອງລັດ ຫຼື ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດໃນການສໍາຫຼວດ-ອອກແບບແຜນຜັງຕົວເມືອງ;

16. **ໂຮງງານ-ອຸດສາຫະກໍາລະດັບໜຶ່ງ, ສອງ ແລະ ສາມ** ໝາຍເຖິງ ປະເພດ ແລະ ລະດັບໂຮງງານ-ອຸດສາຫະກໍາ ແລະ ຫັດຖະກໍາປຸງແຕ່ງ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍອຸດສາຫະກໍາປຸງແຕ່ງ.

### ມາດຕາ 4 (ໃໝ່) ນະໂຍບາຍຂອງລັດກ່ຽວກັບການຜັງເມືອງ

ລັດ ສົ່ງເສີມ ແລະ ພັດທະນາການຜັງເມືອງດ້ວຍການຕອບສະໜອງງົບປະມານ, ພາຫະນະ, ອຸປະກອນທີ່ຈໍາເປັນ, ຍົກລະດັບຄວາມຮູ້, ຄວາມສາມາດໃຫ້ບຸກຄະລາກອນຜັງເມືອງ ມີຄວາມເຂັ້ມແຂງ.

ລັດ ສົ່ງເສີມທຸກພາກສ່ວນເສດຖະກິດທັງພາຍໃນ ແລະ ຕ່າງປະເທດ ລົງທຶນໃສ່ການສ້າງແຜນຜັງຕົວເມືອງ, ຜັງຈັດສັນຄຸ້ມໃໝ່, ການປົກປັກຮັກສາ ແລະ ນໍາໃຊ້ສິ່ງປຸກສ້າງທີ່ມີເອກະລັກຂອງຊາດ, ທ້ອງຖິ່ນ ແລະ ເຜົ່າ, ບູລະນະປະຕິສັງຂອນສິ່ງປຸກສ້າງ ແລະ ຄຸ້ມເກົ່າແກ່ທີ່ມີຄຸນຄ່າທາງດ້ານປະຫວັດສາດ, ສະຖາປັດຕະຍະກໍາ, ສິລະປະກໍາ, ວັດທະນະທໍາ, ສາສະໜາ ແລະ ພູມີທັດຂອງຕົວເມືອງໃຫ້ສວຍງາມ ລວມທັງການລົງທຶນໃສ່ການກໍ່ສ້າງລະບົບໂຄງລ່າງພື້ນຖານທາງດ້ານເຕັກນິກ ແລະ ສັງຄົມ ເພື່ອຈັດຕັ້ງປະຕິບັດແຜນຜັງລວມ ແລະ ແຜນຜັງລະອຽດຂອງຕົວເມືອງ.

ລັດ ຊຸກຍູ້ ແລະ ສົ່ງເສີມທຸກພາກສ່ວນເສດຖະກິດ ເຂົ້າເຖິງແຫຼ່ງທຶນ ເພື່ອພັດທະນາການຜັງເມືອງ, ສ້າງຄວາມເຂັ້ມແຂງ ແລະ ຄວາມສາມາດ, ຮັບປະກັນການພັດທະນາຕົວເມືອງ ແລະ ຊົນນະບົດ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ໝັ້ນທ່ຽງ, ຕາມທິດສີຂຽວ ແລະ ຍືນຍົງ.

### ມາດຕາ 5 (ປັບປຸງ) ຫຼັກການກ່ຽວກັບການຜັງເມືອງ

ການຜັງເມືອງເຄື່ອນໄຫວບົນພື້ນຖານຫຼັກການ ດັ່ງນີ້:

1. ຮັບປະກັນໃຫ້ຕົວເມືອງເປັນໃຈກາງທາງດ້ານການເມືອງ, ການປົກຄອງ, ເສດຖະກິດ, ວັດທະນະທໍາ-ສັງຄົມ ແລະ ການບໍລິການໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຂະແໜງການ ແລະ ທ້ອງຖິ່ນ;

2. ຮັບປະກັນການຕັ້ງຖິ່ນຖານຂອງຊຸມຊົນ ແລະ ຕົວເມືອງໃໝ່ໃຫ້ໄປຕາມແຜນຜັງຕົວເມືອງ;

3. ຮັບປະກັນການພັດທະນາຕົວເມືອງ ໃຫ້ເປັນໄປຕາມແຜນຍຸດທະສາດພັດທະນາຕົວເມືອງ, ແຜນຜັງຕົວເມືອງ, ລະບຽບການຜັງເມືອງ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ;

4. ຮັບປະກັນການປົກປັກຮັກສາສິ່ງແວດລ້ອມ, ວັດທະນະທໍາ, ປະຫວັດສາດ, ເອກະລັກທາງດ້ານສະຖາປັດຕະຍະກໍາ, ສິລະປະກໍາ ແລະ ພູມີທັດຂອງຕົວເມືອງ ໃຫ້ມີຄວາມສວຍງາມ ແລະ ຍືນຍົງ;

5. ຮັບປະກັນການນໍາໃຊ້ທີ່ດິນ ແລະ ຊັບພະຍາກອນທໍາມະຊາດ ໃຫ້ສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ແລະ ຜົນປະໂຫຍດໃນການດໍາລົງຊີວິດຂອງປະຊາຊົນ;

6. ຮັບປະກັນການພັດທະນາໂຄງລ່າງພື້ນຖານພາຍໃນຕົວເມືອງ ໃຫ້ເປັນລະບົບຄົບຊຸດ, ປອດໄພ, ກົມກຽວ ແລະ ເຊື່ອມຈອດຕາມສະພາບຄວາມເປັນຈິງຂອງແຕ່ລະຕົວເມືອງ;

7. ຮັບປະກັນການຜັງເມືອງໃຫ້ມີຄວາມຖືກຕ້ອງ, ຍຸຕິທຳ, ໂປ່ງໃສ ແລະ ສາມາດກວດສອບໄດ້.

**ມາດຕາ 6 (ປັບປຸງ) ພັນທະຂອງພົນລະເມືອງກ່ຽວກັບການຜັງເມືອງ**

ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ອາໄສຢູ່ ສປປ ລາວ ລ້ວນແຕ່ມີພັນທະເຄົາລົບ ແລະ ປະຕິບັດຕາມກົດໝາຍສະບັບນີ້, ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດການຜັງເມືອງ, ປົກປັກຮັກສາສິ່ງແວດລ້ອມ, ວັດທະນະທຳ, ປະຫວັດສາດ, ເອກະລັກທາງດ້ານສະຖາປັດຕະຍະກຳ, ສິລະປະກຳ ແລະ ພູມີທັດຂອງຕົວເມືອງ ໃຫ້ມີຄວາມສວຍງາມ ແລະ ຍືນຍົງ.

**ມາດຕາ 7 (ໃໝ່) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດທີ່ດຳລົງຊີວິດ ແລະ ເຄື່ອນໄຫວວຽກງານຜັງເມືອງຢູ່ ສປປ ລາວ.

**ມາດຕາ 8 (ໃໝ່) ການຮ່ວມມືສາກົນ**

ລັດ ສົ່ງເສີມ ແລະ ເປີດກວ້າງການພົວພັນຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບການຜັງເມືອງ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ວິທະຍາສາດ, ເຕັກນິກ ແລະ ເຕັກໂນໂລຊີ, ການສ້າງ, ການບຳລຸງ, ການຍົກລະດັບດ້ານວິຊາການໃຫ້ແກ່ພະນັກງານ, ການຮ່ວມມືດ້ານການລົງທຶນ ແລະ ປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ລະດັບຕົວເມືອງ ແລະ ແຜນຜັງຕົວເມືອງ
### ໝວດທີ 1
### ລະດັບຕົວເມືອງ

**ມາດຕາ 9 (ໃໝ່) ລະດັບຕົວເມືອງ**

ຕົວເມືອງແບ່ງອອກເປັນ ຫ້າ ລະດັບ ດັ່ງນີ້:

1. ຕົວເມືອງຂອງນະຄອນຫຼວງ;
2. ຕົວເມືອງຂອງນະຄອນ;
3. ຕົວເມືອງຂອງເທດສະບານ;
4. ຕົວເມືອງຂອງເມືອງ;
5. ຊຸມຊົນເມືອງ.

**ມາດຕາ 10 (ໃໝ່) ຕົວເມືອງຂອງນະຄອນຫຼວງ**

ຕົວເມືອງຂອງນະຄອນຫຼວງ ແມ່ນ ເຂດພື້ນທີ່ຕົວເມືອງຊຶ່ງກວມສ່ວນໜຶ່ງ ຫຼື ທັງໝົດຂອງນະຄອນຫຼວງ ໂດຍອີງຕາມຂອບເຂດຂອງແຜນຜັງລວມ ທີ່ໄດ້ຜ່ານການຮັບຮອງເປັນແຕ່ລະໄລຍະ.

**ມາດຕາ 11 (ໃໝ່) ຕົວເມືອງຂອງນະຄອນ**

ຕົວເມືອງຂອງນະຄອນ ແມ່ນ ເຂດພື້ນທີ່ຕົວເມືອງ ຊຶ່ງກວມສ່ວນໜຶ່ງ ຫຼື ທັງໝົດຂອງນະຄອນ ໂດຍອີງຕາມຂອບເຂດຂອງແຜນຜັງລວມ ທີ່ໄດ້ຜ່ານການຮັບຮອງເປັນແຕ່ລະໄລຍະ.

**ມາດຕາ 12 (ໃໝ່) ຕົວເມືອງຂອງເທດສະບານ**

ຕົວເມືອງຂອງເທດສະບານ ແມ່ນ ເຂດພື້ນທີ່ຕົວເມືອງ ຊຶ່ງກວມສ່ວນໜຶ່ງ ຫຼື ທັງໝົດຂອງເທດສະບານ ໂດຍອີງຕາມຂອບເຂດຂອງແຜນຜັງລວມ ທີ່ໄດ້ຜ່ານການຮັບຮອງເປັນແຕ່ລະໄລຍະ.

**ມາດຕາ 13 (ໃໝ່) ຕົວເມືອງຂອງເມືອງ**

ຕົວເມືອງຂອງເມືອງ ແມ່ນ ເຂດພື້ນທີ່ຕົວເມືອງ ຊຶ່ງກວມສ່ວນໜຶ່ງຂອງເມືອງ ໂດຍອີງຕາມຂອບເຂດຂອງແຜນຜັງລວມ ທີ່ໄດ້ຜ່ານການຮັບຮອງເປັນແຕ່ລະໄລຍະ.

**ມາດຕາ 14 (ໃໝ່) ຊຸມຊົນເມືອງ**

ຊຸມຊົນເມືອງ ແມ່ນ ເຂດໃຈກາງຂອງບ້ານໃຫຍ່ ຫຼື ກຸ່ມບ້ານ ທີ່ຕິດກັນເປັນສູນກາງທາງດ້ານການຄ້າຂາຍ, ທາງດ້ານວັດທະນາທຳ-ສັງຄົມ.

## ໝວດທີ 2
## ແຜນຜັງຕົວເມືອງ

**ມາດຕາ 15 (ປັບປຸງ) ແຜນຜັງຕົວເມືອງ**

ແຜນຜັງຕົວເມືອງ ແມ່ນ ແຜນຜັງກຳນົດພື້ນທີ່ ທີ່ຈະສ້າງ, ພັດທະນາ ແລະ ຂະຫຍາຍຕົວເມືອງ ຕາມການວາງແຜນ ໂດຍມີການຈັດສັນລະບົບໂຄງລ່າງພື້ນຖານທາງດ້ານເຕັກນິກ ແລະ ສັງຄົມ, ເຂດທີ່ຢູ່ອາໄສ, ເຂດສຳນັກງານອົງການ, ເຂດກະສິກຳ, ເຂດອຸດສາຫະກຳ, ເຂດການຄ້າ ແລະ ການບໍລິການ, ເຂດວັດທະນະທຳ, ເຂດກິລາ, ສວນສາທາລະນະ, ເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເຂດສະຫງວນ, ເຂດຂຽວ, ເຂດຫວງຫ້າມ ແລະ ເຂດອື່ນ ຢ່າງມີປະສິດທິຜົນ.

**ມາດຕາ 16 (ໃໝ່) ປະເພດແຜນຜັງຕົວເມືອງ**

ແຜນຜັງຕົວເມືອງ ປະກອບດ້ວຍ:

1. ແຜນຜັງລວມ;
2. ແຜນຜັງລະອຽດ.

ແຜນຜັງຕົວເມືອງ ສ້າງຂຶ້ນສໍາລັບຕົວເມືອງ ຂອງນະຄອນຫຼວງ, ຕົວເມືອງຂອງນະຄອນ, ຕົວເມືອງຂອງເທດສະບານ, ຕົວເມືອງຂອງເມືອງ ແລະ ຊຸມຊົນເມືອງ.

**ມາດຕາ 17 (ໃໝ່) ແຜນຜັງລວມ**

ແຜນຜັງລວມ ແມ່ນ ແຜນຜັງນະໂຍບາຍ, ຍຸດທະສາດ, ທິດທາງການພັດທະນາ ແລະ ປົກປັກຮັກສາຕົວເມືອງ ໂດຍແບ່ງເຂດນໍາໃຊ້ທີ່ດິນປະເພດຕ່າງໆ, ວາງລະບົບໂຄງລ່າງພື້ນຖານທາງດ້ານເຕັກນິກ ແລະ ສັງຄົມ ລວມທັງການກໍານົດມາດຕະການຈັດຕັ້ງປະຕິບັດ.

**ມາດຕາ 18 (ໃໝ່) ເອກະສານນໍາໃຊ້ເຂົ້າໃນການສ້າງແຜນຜັງລວມ**

ເອກະສານນໍາໃຊ້ເຂົ້າໃນການສ້າງແຜນຜັງລວມ ປະກອບດ້ວຍ:

1. ຍຸດທະສາດການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ແຜນຜັງຈັດສັນທີ່ດິນທີ່ກ່ຽວຂ້ອງ;
2. ຍຸດທະສາດການພັດທະນາຕົວເມືອງ, ແຜນການພັດທະນາຂະແໜງການ ແລະ ທ້ອງຖິ່ນ;
3. ກໍານົດໝາຍ ແລະ ມາດຕະຖານເຕັກນິກຜັງເມືອງ, ມາດຕະຖານເຕັກນິກຂອງຂະແໜງການອື່ນທີ່ກ່ຽວຂ້ອງ;
4. ພື້ນແຜນທີ່ ແລະ ແຜນທີ່ພູມສັນຖານ.

**ມາດຕາ 19 (ໃໝ່) ເອກະສານແຜນຜັງລວມ**

ເອກະສານແຜນຜັງລວມ ມີ ດັ່ງນີ້:

1. ບົດລາຍງານ;
2. ລະບຽບການນໍາໃຊ້ທີ່ດິນຜັງເມືອງ;
3. ພື້ນແຜນທີ່ ແລະ ແຜນຜັງເຕັກນິກ;
4. ຮູບຈໍາລອງ ແລະ/ຫຼື ພາບສາມມິຕິຂອງຕົວເມືອງ.

**ມາດຕາ 20 (ໃໝ່) ບົດລາຍງານ**

ບົດລາຍງານ ມີເນື້ອໃນ ດັ່ງນີ້:

1. ພາກສະເໜີລວມ: ຈຸດປະສົງ ແລະ ຄາດໝາຍ, ຂອບເຂດຂອງການວາງແຜນຜັງລວມ ແລະ ແຜນດໍາເນີນງານ;
2. ບົດສະເໜີສະພາບປັດຈຸບັນ, ການວິເຄາະ ແລະ ການປະເມີນບັນຫາທາງດ້ານກາຍຍະພາບ, ເສດຖະກິດ-ສັງຄົມ;
3. ນິຕິກໍາກ່ຽວກັບການຈັດຕັ້ງປະຕິບັດແຜນຜັງຕົວເມືອງ, ການຄຸ້ມຄອງການນໍາໃຊ້ທີ່ດິນ ແລະ ພູມີທັດຂອງຕົວເມືອງ;
4. ຍຸດທະສາດການພັດທະນາຕົວເມືອງ;
5. ຜົນກະທົບຕໍ່ສິ່ງແວດລ້ອມທໍາມະຊາດ-ສັງຄົມ ແລະ ຄວາມສ່ຽງຕໍ່ໄພພິບັດທໍາມະຊາດ;

6. ບົດສະຫຼຸບສັງລວມ ແລະ ມາດຕະການຈັດຕັ້ງປະຕິບັດແຜນຜັງຕົວເມືອງ.

**ມາດຕາ 21 (ໃໝ່) ລະບຽບການນຳໃຊ້ທີ່ດິນຜັງເມືອງ**

ລະບຽບການນຳໃຊ້ທີ່ດິນຜັງເມືອງ ມີ ເນື້ອໃນຕົ້ນຕໍ ດັ່ງນີ້:

1. ຂອບເຂດການນຳໃຊ້ລະບຽບການ;
2. ການຈັດແບ່ງເຂດການນຳໃຊ້ທີ່ດິນ;
3. ລະບຽບການນຳໃຊ້ທີ່ດິນຂອງແຕ່ລະເຂດ;
4. ພື້ນທີ່ສຳລັບສ້າງລະບົບໂຄງລ່າງພື້ນຖານທາງດ້ານເຕັກນິກ ແລະ ສັງຄົມ;
5. ຮູບຊົງທາງດ້ານສະຖາປັດຕະຍະກຳຕົວເມືອງ.

**ມາດຕາ 22 (ໃໝ່) ພື້ນແຜນທີ່ ແລະ ແຜນຜັງເຕັກນິກ**

ພື້ນແຜນທີ່ ແລະ ແຜນຜັງເຕັກນິກ ຂອງແຜນຜັງລວມ ທີ່ໃຊ້ມາດຕາສ່ວນແຕ່ ໜຶ່ງສ່ວນຫ້າພັນ ຫາ ໜຶ່ງສ່ວນຊາວພັນ ມີ ດັ່ງນີ້:

1. ພື້ນແຜນທີ່ ແລະ ແຜນຜັງເຕັກນິກຂອງຕົວເມືອງໃນສະພາບປັດຈຸບັນ:
   - ແຜນທີ່ພູມສັນຖານ, ຊີນລະສາດ, ອຸທົກກະສາດ, ທໍລະນີສາດ, ເຂດສ່ຽງໄພ;
   - ແຜນຜັງທີ່ຕັ້ງ ແລະ ເຂດແດນຂອງການສ້າງແຜນຜັງລວມຂອງຕົວເມືອງ;
   - ແຜນຜັງການພົວພັນລະຫວ່າງເຂດຕ່າງໆຢູ່ພາຍໃນ ແລະ ພາຍນອກ;
   - ແຜນຜັງການນຳໃຊ້ທີ່ດິນຜັງເມືອງ;
   - ແຜນຜັງຂອບເຂດບ້ານ ແລະ ຄວາມໜາແໜ້ນຂອງປະຊາກອນ;
   - ແຜນຜັງລະບົບໂຄງລ່າງພື້ນຖານທາງດ້ານເຕັກນິກ ແລະ ສັງຄົມ.
2. ພື້ນແຜນທີ່ ແລະ ແຜນຜັງເຕັກນິກຂອງຕົວເມືອງທີ່ສະເໜີໃໝ່:
   - ແຜນຜັງການນຳໃຊ້ທີ່ດິນຜັງເມືອງ;
   - ແຜນຜັງລະດັບໜ້າດິນ;
   - ແຜນຜັງລະບົບໂຄງລ່າງພື້ນຖານທາງດ້ານເຕັກນິກ ແລະ ສັງຄົມ;
   - ແຜນຜັງອື່ນທີ່ມີຄວາມຈຳເປັນ.

**ມາດຕາ 23 (ໃໝ່) ຮູບຈຳລອງ, ພາບສາມມິຕິຂອງຕົວເມືອງ**

ຮູບຈຳລອງ ແມ່ນ ຮູບຕົວແບບຂອງຕົວເມືອງທີ່ມີຢູ່ແລ້ວ ຫຼື ຈະສ້າງຂຶ້ນໃໝ່ ຫຼື ສ້າງຄືນໃໝ່ດ້ວຍມາດຕາສ່ວນນ້ອຍກວ່າ ຫຼື ເທົ່າກັບແຜນຜັງຕົວເມືອງ.

ພາບສາມມິຕິ ແມ່ນ ພາບທີ່ສາມາດເຫັນສາມດ້ານພ້ອມກັນຂອງແຜນຜັງຕົວເມືອງ ຄື ລວງຍາວ, ລວງກວ້າງ ແລະ ລວງສູງ.

ຮູບຈຳລອງ, ພາບສາມມິຕິ ຂອງຕົວເມືອງ ນຳໃຊ້ເປັນຂໍ້ມູນເພື່ອສະແດງໃຫ້ເຫັນຄວາມຊັດເຈນຂອງແຜນຜັງດັ່ງກ່າວ.

## ໝວດທີ 3
## ເນື້ອໃນຂອງແຜນຜັງລວມ

**ມາດຕາ 24 (ໃໝ່) ເນື້ອໃນຂອງແຜນຜັງລວມຕົວເມືອງຂອງນະຄອນຫຼວງ**

ແຜນຜັງລວມຕົວເມືອງຂອງນະຄອນຫຼວງ ປະກອບດ້ວຍ ເນື້ອໃນຕົ້ນຕໍ ດັ່ງນີ້:

1. ນະໂຍບາຍ, ທິດທາງການນໍາໃຊ້ທຸກທ່າແຮງບົ່ມຊ້ອນ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມໃຫ້ເປັນສູນກາງຂອງປະເທດ ພ້ອມທັງມີວິໄສທັດທີ່ຍາວກວ່າ ສາມສິບປີ;

2. ການຄາດຄະເນການເພີ່ມຂຶ້ນຂອງປະຊາກອນ, ການກໍານົດຂອບເຂດພື້ນທີ່ວາງແຜນ ແລະ ການຂະຫຍາຍຕົວເມືອງໃນອະນາຄົດ, ການແບ່ງເຂດນໍາໃຊ້ທີ່ດິນ ແລະ ການຈັດສັນເຂດ, ການນໍາໃຊ້ຊັບພະຍາກອນທໍາມະຊາດ ຢ່າງມີປະສິດທິຜົນ ແລະ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;

3. ການກໍານົດລະບົບໂຄງລ່າງພື້ນຖານທາງດ້ານເຕັກນິກ ແລະ ສັງຄົມ;

4. ແຜນງານ ແລະ ໂຄງການບູລິມະສິດຢູ່ພື້ນທີ່ໃຈກາງຕົວເມືອງ ແລະ ຊານເມືອງ.

**ມາດຕາ 25 (ໃໝ່) ເນື້ອໃນຂອງແຜນຜັງລວມຕົວເມືອງຂອງ ນະຄອນ, ເທດສະບານ ແລະ ເມືອງ**

ແຜນຜັງລວມຕົວເມືອງຂອງ ນະຄອນ, ເທດສະບານ ແລະ ເມືອງ ປະກອບດ້ວຍ ເນື້ອໃນຕົ້ນຕໍ ດັ່ງນີ້:

1. ນະໂຍບາຍ, ທິດທາງ ແລະ ການນໍາໃຊ້ທຸກທ່າແຮງບົ່ມຊ້ອນ ໃນການພັດທະນາເສດຖະກິດ-ສັງຄົມໃຫ້ເປັນໃຈກາງຂອງແຂວງ, ນະຄອນ, ເທດສະບານ ແລະ ເມືອງ ພ້ອມທັງມີວິໄສທັດທີ່ຍາວກວ່າ ຊາວປີ;

2. ການຄາດຄະເນການເພີ່ມຂຶ້ນຂອງປະຊາກອນ, ການກໍານົດຂອບເຂດພື້ນທີ່ຈະສ້າງແຜນຜັງ ແລະ ການຂະຫຍາຍຕົວເມືອງໃນອະນາຄົດ, ການແບ່ງເຂດນໍາໃຊ້ທີ່ດິນ ແລະ ການຈັດສັນເຂດ, ການນໍາໃຊ້ຊັບພະຍາກອນທໍາມະຊາດ ຢ່າງມີປະສິດທິຜົນ ແລະ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;

3. ການກໍານົດລະບົບໂຄງລ່າງພື້ນຖານທາງດ້ານເຕັກນິກ ແລະ ສັງຄົມ;

4. ແຜນງານ ແລະ ໂຄງການບູລິມະສິດ ຢູ່ໃນພື້ນທີ່ໃຈກາງຕົວເມືອງ ແລະ ຊານເມືອງ.

**ມາດຕາ 26 (ໃໝ່) ເນື້ອໃນຂອງແຜນຜັງລວມຂອງຊຸມຊົນເມືອງ**

ແຜນຜັງລວມຂອງຊຸມຊົນເມືອງ ມີ ເນື້ອໃນຕົ້ນຕໍ ດັ່ງນີ້:

1. ນະໂຍບາຍ, ທິດທາງໃນການນໍາໃຊ້ທຸກທ່າແຮງບົ່ມຊ້ອນ ໃນການພັດທະນາເສດຖະກິດ-ສັງຄົມ, ການກໍານົດຂອບເຂດພື້ນທີ່ສ້າງແຜນຜັງ ແລະ ການຂະຫຍາຍຕົວເມືອງໃນອະນາຄົດ;

2. ການຄາດຄະເນການເພີ່ມຂຶ້ນຂອງປະຊາກອນ, ການແບ່ງເຂດນໍາໃຊ້ທີ່ດິນ ແລະ ການຈັດສັນເຂດ, ການນໍາໃຊ້ຊັບພະຍາກອນທໍາມະຊາດ ຢ່າງມີປະສິດທິຜົນ ແລະ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;

3. ການກໍານົດລະບົບໂຄງລ່າງພື້ນຖານທາງດ້ານເຕັກນິກ ແລະ ສັງຄົມ;

4. ແຜນງານ ແລະ ໂຄງການບູລິມະສິດຢູ່ໃນພື້ນທີ່ຊຸມຊົນເມືອງ.

ມາດຕາ 27 (ໃໝ່) ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ

ການສ້າງແຜນຜັງລວມທຸກລະດັບ ຕ້ອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມທໍາມະຊາດ ແລະ ສັງຄົມ ຊຶ່ງມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຄົ້ນຄວ້າ ແລະ ວິໄຈຂໍ້ມູນດ້ານຕ່າງໆ ກ່ຽວກັບພູມສັນຖານວິທະຍາ, ທໍລະນີສາດ, ອຸທົກກະສາດ, ຊົນລະສາດ, ອຸຕຸນິຍົມວິທະຍາ, ແຫຼ່ງນໍ້າ, ອາກາດ, ລະບົບນິເວດວິທະຍາ, ສຽງ, ແສງ, ກິ່ນ, ອາຍ ແລະ ອື່ນໆ, ການຂຸດຄົ້ນ ແລະ ນໍາໃຊ້ແຫຼ່ງຊັບພະຍາກອນທໍາມະຊາດ, ສະພາບທາງດ້ານສັງຄົມ, ພູມີທັດ, ທັດສະນີຍະພາບ, ມໍລະດົກສະຖານທາງດ້ານປະຫວັດສາດ, ວັດທະນະທໍາ ແລະ ທໍາມະຊາດ;

2. ຄາດຄະເນການປ່ຽນແປງຂອງສະພາບແວດລ້ອມ ທາງດ້ານທໍາມະຊາດ ແລະ ສັງຄົມໃນໄລຍະການຈັດຕັ້ງປະຕິບັດແຜນຜັງຕົວເມືອງ;

3. ກໍານົດມາດຕະການປ້ອງກັນ, ຫຼຸດຜ່ອນ ແລະ ຟື້ນຟູສະພາບແວດລ້ອມ ທາງດ້ານທໍາມະຊາດ ແລະ ສັງຄົມ ຈາກຜົນກະທົບພ້ອມທັງສ້າງແຜນຕິດຕາມກວດກາ.

## ໝວດທີ 4
## ການນໍາໃຊ້ທີ່ດິນໃນແຜນຜັງລວມ

ມາດຕາ 28 (ປັບປຸງ) ການແບ່ງເຂດນໍາໃຊ້ທີ່ດິນໃນແຜນຜັງລວມ

ການນໍາໃຊ້ທີ່ດິນໃນແຜນຜັງລວມຕາມລະດັບຂອງຕົວເມືອງ ໄດ້ຈັດແບ່ງເປັນເຂດ ດັ່ງນີ້:

1. ຕົວເມືອງຂອງນະຄອນຫຼວງ, ນະຄອນ, ເທດສະບານ ແລະ ເມືອງ:
   - ເຂດໃຈກາງຕົວເມືອງ;
   - ເຂດອ້ອມໃຈກາງຕົວເມືອງ;
   - ເຂດຊານເມືອງ;
   - ເຂດຂະຫຍາຍຕົວເມືອງ;
   - ເຂດຫວງຫ້າມ.
2. ຊຸມຊົນເມືອງ
   - ເຂດໃຈກາງຊຸມຊົນເມືອງ;
   - ເຂດຂະຫຍາຍຊຸມຊົນເມືອງ;
   - ເຂດຫວງຫ້າມ.

ເຂດໃຈກາງຊຸມຊົນເມືອງ, ເຂດຂະຫຍາຍຊຸມຊົນເມືອງ ແລະ ເຂດຫວງຫ້າມ ໃຫ້ປະຕິບັດຕາມເນື້ອໃນທີ່ໄດ້ກໍານົດໄວ້ໃນມາດຕາ 29, 32 ແລະ 33 ຂອງກົດໝາຍສະບັບນີ້.

ມາດຕາ 29 (ປັບປຸງ) ເຂດໃຈກາງຕົວເມືອງ

ເຂດໃຈກາງຕົວເມືອງ ແມ່ນ ເຂດທີ່ມີຄວາມໜາແໜ້ນຂອງປະຊາກອນ, ທີ່ຢູ່ອາໄສ ແລະ ສິ່ງປຸກສ້າງສູງກວ່າເຂດອື່ນ ທັງເປັນສູນກາງການປົກຄອງ, ສະຖາບັນການສຶກສາ, ໂຮງໝໍ, ສູນການຄ້າ, ຕະຫຼາດ, ສະຖານທີ່ບໍລິ

ການ, ເຂດຂຽວ, ສວນສາທາລະນະ, ສະຖານີລົດຂົນສົ່ງໂດຍສານໃນເມືອງ, ສະຖານທີ່ຈອດລົດ, ລະບົບໂຄງລ່າງພື້ນຖານທາງດ້ານເຕັກນິກ ແລະ ສັງຄົມ.

ຕົວເມືອງໜຶ່ງ ອາດມີໜຶ່ງ ຫຼື ຫຼາຍເຂດໃຈກາງ ໂດຍອີງຕາມຈຸດພິເສດ ແລະ ຄວາມຮຽກຮ້ອງຕ້ອງການຕົວຈິງຂອງຕົວເມືອງນັ້ນ.

ໃນເຂດໃຈກາງຕົວເມືອງ ບໍ່ອະນຸຍາດໃຫ້ສ້າງໂຮງງານອຸດສາຫະກຳທຸກລະດັບ, ອູ່ສ້ອມແປງລົດໃຫຍ່ ແລະ ສາງ ທີ່ມີເນື້ອທີ່ເກີນ ໜຶ່ງຮ້ອຍຕາແມັດ.

### ມາດຕາ 30 (ປັບປຸງ) ເຂດອ້ອມໃຈກາງຕົວເມືອງ

ເຂດອ້ອມໃຈກາງຕົວເມືອງ ແມ່ນ ເຂດທີ່ຕໍ່ຈາກເຂດໃຈກາງຕົວເມືອງ, ມີຄວາມໜາແໜ້ນຂອງປະຊາກອນ, ທີ່ຢູ່ອາໄສ ແລະ ສິ່ງປຸກສ້າງຕໍ່າກວ່າເຂດໃຈກາງເມືອງ ທັງເປັນເຂດສຳນັກງານ, ສະຖາບັນການສຶກສາ, ໂຮງໝໍ, ສູນການຄ້າ, ຕະຫຼາດ, ສະຖານທີ່ບໍລິການ, ເຂດຂຽວ, ສວນສາທາລະນະ, ລະບົບໂຄງລ່າງພື້ນຖານທາງດ້ານເຕັກນິກ ແລະ ສັງຄົມ, ໂຮງງານອຸດສາຫະກຳລະດັບສາມ ແລະ ສາງທີ່ມີເນື້ອທີ່ບໍ່ເກີນ ຫ້າຮ້ອຍຕາແມັດ.

ຕົວເມືອງໜຶ່ງ ອາດມີໜຶ່ງ ຫຼື ຫຼາຍເຂດອ້ອມໃຈກາງ ໂດຍອີງຕາມຈຸດພິເສດ ແລະ ຄວາມຮຽກຮ້ອງຕ້ອງການຕົວຈິງຂອງເມືອງນັ້ນ.

### ມາດຕາ 31 (ປັບປຸງ) ເຂດຊານເມືອງ

ເຂດຊານເມືອງ ແມ່ນ ເຂດທີ່ຕໍ່ຈາກເຂດອ້ອມໃຈກາງເມືອງ, ມີຄວາມໜາແໜ້ນຂອງປະຊາກອນ, ທີ່ຢູ່ອາໄສ ແລະ ສິ່ງປຸກສ້າງ ຕໍ່າກວ່າເຂດອ້ອມໃຈກາງເມືອງ ທັງເປັນເຂດສຳນັກງານ, ສະຖາບັນການສຶກສາ, ໂຮງໝໍ, ຮ້ານຄ້າ, ຕະຫຼາດ, ສະຖານບໍລິການ, ສະໜາມກິລາ, ສະຖານທີ່ທຳມະຊາດ, ສະຖາປັດຕະຍະກຳ ທີ່ມີຄຸນຄ່າທາງດ້ານວັດທະນະທຳ ແລະ ປະຫວັດສາດ, ເຂດຂຽວ, ສວນສາທາລະນະ, ລະບົບໂຄງລ່າງພື້ນຖານທາງດ້ານເຕັກນິກ ແລະ ສັງຄົມ, ໂຮງງານອຸດສາຫະກຳລະດັບສອງ ແລະ ສາມ, ສາງທີ່ມີເນື້ອທີ່ເກີນ ຫ້າຮ້ອຍຕາແມັດ, ເຂດກະສິກຳ, ເຂດປ່າຊ້າ, ສຸສານ ແລະ ເຂດເປົ່າຫວ່າງ.

### ມາດຕາ 32 (ປັບປຸງ) ເຂດຂະຫຍາຍຕົວເມືອງ

ເຂດຂະຫຍາຍຕົວເມືອງ ແມ່ນ ເຂດທີ່ຕໍ່ຈາກເຂດຊານເມືອງອອກໄປ ຊຶ່ງຈັດສັນໄວ້ເພື່ອຮອງຮັບການຂະຫຍາຍຕົວຂອງຕົວເມືອງ, ການເພີ່ມຂຶ້ນຂອງປະຊາກອນ ແລະ ກິດຈະການທາງດ້ານເສດຖະກິດ-ສັງຄົມ.

ເຂດຂະຫຍາຍຕົວເມືອງ ປະກອບດ້ວຍ ທີ່ດິນສຳລັບການປຸກສ້າງທີ່ຢູ່ອາໄສ, ສະຖາບັນການສຶກສາ, ໂຮງໝໍ, ຕະຫຼາດ, ສູນການຄ້າ, ສະຖານທີ່ບໍລິການ, ລະບົບການຄົມມະນາຄົມຂົນສົ່ງ, ໂຮງງານອຸດສາຫະກຳລະດັບໜຶ່ງ ແລະ ສອງ, ສາງທີ່ມີເນື້ອທີ່ເກີນ ຫ້າຮ້ອຍຕາແມັດ, ສະຖານທີ່ທ່ອງທ່ຽວ, ເຂດຂຽວ, ສວນສາທາລະນະ, ທີ່ດິນສຳລັບກະສິກຳ ແລະ ປ່າສະຫງວນ.

**ມາດຕາ 33 (ໃໝ່) ເຂດຫວງຫ້າມ**

ເຂດຫວງຫ້າມ ແມ່ນ ເຂດທີ່ກຳນົດໄວ້ໃນແຜນຜັງລວມ ແລະ ແຜນຜັງລະອຽດ ເພື່ອຮັກສາໄວ້ເປັນສະຖານທີ່ວັດທະນະທຳ-ສັງຄົມ, ທິວທັດ, ແຫຼ່ງທ່ອງທ່ຽວທຳມະຊາດ, ເຂດຊຸ່ມຊື່ນ, ເຂດແຄມແມ່ນ້ຳລຳເຊ, ຫ້ວຍ ໜອງ, ຄອງບຶງ, ເຂດຂຽວ ທີ່ຮັບໃຊ້ຜົນປະໂຫຍດລວມຂອງຊາດ ແລະ ອື່ນໆ.

## ໝວດທີ 5
## ແຜນຜັງລະບົບໂຄງລ່າງພື້ນຖານ ແລະ ຕາໜ່າງຖະໜົນ

**ມາດຕາ 34 (ໃໝ່) ແຜນຜັງລະບົບໂຄງລ່າງພື້ນຖານ**

ແຜນຜັງລະບົບໂຄງລ່າງພື້ນຖານ ປະກອບດ້ວຍ:

1. ແຜນຜັງລະບົບໂຄງລ່າງພື້ນຖານທາງດ້ານເຕັກນິກ;
2. ແຜນຜັງລະບົບໂຄງລ່າງພື້ນຖານທາງດ້ານສັງຄົມ.

**ມາດຕາ 35 (ໃໝ່) ແຜນຜັງລະບົບໂຄງລ່າງພື້ນຖານທາງດ້ານເຕັກນິກ**

ແຜນຜັງລະບົບໂຄງລ່າງພື້ນຖານທາງດ້ານເຕັກນິກ ແມ່ນ ເອກະສານທີ່ສະແດງເຖິງລະບົບການຂົນສົ່ງ, ການຈະລາຈອນ, ການສະໜອງພະລັງງານ, ໄຟຟ້າ, ແສງສະຫວ່າງສາທາລະນະ, ເຄືອຂ່າຍສື່ສານ, ນ້ຳປະປາ, ບຳບັດນ້ຳໂສໂຄກ, ນ້ຳເປື້ອນ, ລະບາຍນ້ຳ, ຊົນລະປະທານ, ເກັບມ້ຽນ ແລະ ກຳຈັດຂີ້ເຫຍື້ອໃນຕົວເມືອງ.

ການສ້າງແຜນຜັງໂຄງລ່າງພື້ນຖານທາງດ້ານເຕັກນິກ ຕ້ອງຮັບປະກັນຄວາມຕໍ່ເນື່ອງ, ການເຊື່ອມຈອດຢ່າງເປັນລະບົບ ແລະ ມີການປະສານກົມກຽວທາງດ້ານທີ່ຕັ້ງ, ຂະໜາດ ແລະ ຂອບເຂດການບໍລິການຂອງລະບົບດັ່ງກ່າວທີ່ສະໜອງໃຫ້ແກ່ຕົວເມືອງຢ່າງມີຄວາມສະດວກ, ປອດໄພ ແລະ ມີປະສິດທິຜົນ.

**ມາດຕາ 36 (ໃໝ່) ແຜນຜັງລະບົບໂຄງລ່າງພື້ນຖານທາງດ້ານສັງຄົມ**

ແຜນຜັງລະບົບໂຄງລ່າງພື້ນຖານທາງດ້ານສັງຄົມ ແມ່ນ ເອກະສານທີ່ສະແດງເຖິງທີ່ຕັ້ງສຳນັກງານ, ທີ່ຢູ່ອາໄສ, ສະຖານທີ່ສາທາລະນະສຸກ, ວັດທະນະທຳ, ການສຶກສາ, ສະໜາມກິລາ, ສະຖານທີ່ການຄ້າ, ອາຄານ, ສະຖານທີ່ສາທາລະນະ ແລະ ສະຖານທີ່ອື່ນ.

ແຜນຜັງລະບົບໂຄງລ່າງພື້ນຖານທາງດ້ານສັງຄົມ ຕ້ອງກຳນົດທີ່ຕັ້ງ, ຂະໜາດ, ຂອບເຂດ, ສິ່ງອຳນວຍຄວາມສະດວກ ໃຫ້ສອດຄ່ອງກັບລະບົບໂຄງລ່າງພື້ນຖານທາງດ້ານເຕັກນິກ, ກຳນົດໝາຍ ແລະ ມາດຕະຖານເຕັກນິກຜັງເມືອງ, ຮັບປະກັນການບໍລິການທີ່ສະດວກ, ວ່ອງໄວ, ປອດໄພ, ປະຢັດເວລາ ແລະ ການໃຊ້ຈ່າຍໃນການປະຕິບັດໜ້າທີ່ວຽກງານ ແລະ ການດຳລົງຊີວິດປະຈຳວັນຂອງປະຊາຊົນ.

**ມາດຕາ 37 (ໃໝ່) ຕາໜ່າງຖະໜົນ**

ຕາໜ່າງຖະໜົນ ມີ ສອງລະດັບ ດັ່ງນີ້:

1. ຕາໜ່າງເອກ ແມ່ນ ຕາໜ່າງຖະໜົນຂອງຕົວເມືອງ ທີ່ເປັນໂຄງສ້າງພື້ນຖານອັນສຳຄັນ ໃນແຜນຜັງລວມຂອງຕົວເມືອງ ຊຶ່ງປະກອບດ້ວຍ ຖະໜົນສາຍເອກ ແລະ ຖະໜົນສາຍຫຼັກ ເປັນຕົ້ນຕໍ;

2. ຕາໜ່າງຫຼັກ ແມ່ນ ຕາໜ່າງຖະໜົນໃນເຂດໃດໜຶ່ງຂອງຕົວເມືອງ ທີ່ເປັນໂຄງສ້າງພື້ນຖານໃນແຜນຜັງລະອຽດ ຊຶ່ງປະກອບດ້ວຍ ຖະໜົນສາຍເຊື່ອມຕໍ່, ຖະໜົນສາຍແຈກ ແລະ ທາງຮ່ອມ.

## ໝວດທີ 6
## ການສ້າງ, ການຮັບຮອງ, ການທົບທວນ ແລະ ການດັດແກ້ແຜນຜັງລວມ

**ມາດຕາ 38 (ປັບປຸງ) ການສ້າງ ແລະ ການຮັບຮອງແຜນຜັງລວມ**

ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຄົ້ນຄວ້າສ້າງແຜນຜັງລວມຕົວເມືອງ ຂອງນະຄອນຫຼວງ ໂດຍປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລ້ວນຳສະເໜີຕໍ່ລັດຖະບານເພື່ອນຳສະເໜີຕໍ່ສະພາແຫ່ງຊາດ ພິຈາລະນາຮັບຮອງ.

ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ເປັນຜູ້ຄົ້ນຄວ້າສ້າງແຜນຜັງລວມຕົວເມືອງຂອງນະຄອນ, ເທດສະບານ ແລະ ເມືອງ ໂດຍປະສານສົມທົບກັບພະແນກການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລ້ວນຳສະເໜີຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເພື່ອນຳສະເໜີຕໍ່ສະພາປະຊາຊົນຂັ້ນແຂວງ ພິຈາລະນາຮັບຮອງ.

ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ ເປັນຜູ້ຄົ້ນຄວ້າສ້າງແຜນຜັງລວມຂອງຊຸມຊົນເມືອງ ໂດຍປະສານສົມທົບກັບຫ້ອງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລ້ວສະເໜີຕໍ່ອົງການປົກຄອງຂັ້ນເມືອງ ເພື່ອນຳສະເໜີຕໍ່ອົງການປົກຄອງຂັ້ນແຂວງທີ່ກ່ຽວຂ້ອງ ພິຈາລະນາຮັບຮອງ.

**ມາດຕາ 39 (ໃໝ່) ການທົບທວນ ແລະ ການດັດແກ້ແຜນຜັງລວມ**

ແຜນຜັງລວມຕ້ອງໄດ້ຮັບການທົບທວນ ແລະ ປະເມີນຜົນການຈັດຕັ້ງປະຕິບັດທຸກຫ້າປີ, ຖ້າມີຄວາມຈຳເປັນກໍສາມາດດັດແກ້ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການ ຂອງການພັດທະນາເສດຖະກິດ-ສັງຄົມຂອງຕົວເມືອງໃນແຕ່ລະໄລຍະ.

ການທົບທວນ, ການດັດແກ້ ໃຫ້ປະຕິບັດຕາມຂັ້ນຕອນຂອງການສ້າງ ແລະ ການຮັບຮອງແຜນຜັງລວມຕາມທີ່ໄດ້ກຳນົດໄວ້ໃນມາດຕາ 38 ຂອງກົດໝາຍສະບັບນີ້.

## ໝວດທີ 7
## ແຜນຜັງລະອຽດ

**ມາດຕາ 40 (ໃໝ່) ແຜນຜັງລະອຽດ**

ແຜນຜັງລະອຽດ ແມ່ນ ການຜັນຂະຫຍາຍແຜນຜັງລວມໃຫ້ເປັນອັນລະອຽດ ເພື່ອຮັບໃຊ້ໃຫ້ແກ່ການຈັດຕັ້ງປະຕິບັດໂຄງການຕົ້ນຕໍ ໃນແຕ່ລະໄລຍະ ໂດຍສອດຄ່ອງກັບລັກສະນະທີ່ຕັ້ງທາງດ້ານທຳມະຊາດ, ພູມສັນຖານ ແລະ ສະຖາປັດຕະຍະກຳໃນແຕ່ລະພື້ນທີ່ຂອງຕົວເມືອງນັ້ນ.

ແຜນຜັງລະອຽດ ແມ່ນ ເອກະສານທີ່ສະແດງເຖິງຂອບເຂດການນຳໃຊ້ທີ່ດິນ, ພື້ນທີ່ສະເພາະໃດໜຶ່ງ, ອັດຕາສ່ວນ ແລະ ສຳປະສິດການນຳໃຊ້ທີ່ດິນປຸກສ້າງ, ຄວາມສູງ, ຄວາມໜາແໜ້ນຂອງປະຊາກອນ, ລັກສະນະທາງ

ດ້ານສະຖາປັດຕະຍະກຳ, ເສັ້ນແຖວປຸກສ້າງ, ເຂດປ້ອງກັນ, ເຂດສະຫງວນ ແລະ ເຂດຫວງຫ້າມ, ລະບົບໂຄງລ່າງພື້ນຖານທາງດ້ານເຕັກນິກ ແລະ ສັງຄົມ ໃຫ້ສອດຄ່ອງກັບແຜນຜັງລວມ ພ້ອມທັງປະເມີນຜົນກະທົບຕໍ່ສິ່ງແວດລ້ອມທາງດ້ານທຳມະຊາດ ແລະ ສັງຄົມ.

**ມາດຕາ 41 (ໃໝ່) ປະເພດຂອງແຜນຜັງລະອຽດ**

ແຜນຜັງລະອຽດແບ່ງອອກເປັນ ຫ້າ ປະເພດ ດັ່ງນີ້:

1. ແຜນຜັງຈັດສັນເຂດໃນຕົວເມືອງ;
2. ແຜນຜັງຈັດສັນຄຸ້ມຄືນໃໝ່;
3. ແຜນຜັງສ້າງຄຸ້ມໃໝ່;
4. ແຜນຜັງຈັດແບ່ງຕອນດິນປຸກສ້າງ;
5. ແຜນຜັງຈັດຮູບທີ່ດິນ.

ແຜນຜັງລະອຽດ ຕ້ອງຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມໃນແຕ່ລະໄລຍະ.

**ມາດຕາ 42 (ໃໝ່) ແຜນຜັງຈັດສັນເຂດໃນຕົວເມືອງ**

ແຜນຜັງຈັດສັນເຂດໃນຕົວເມືອງ ແມ່ນ ເອກະສານທີ່ກຳນົດການຈັດສັນທີ່ດິນໃນຂອບເຂດພື້ນທີ່ໃດໜຶ່ງຂອງແຜນຜັງລວມ ເຊັ່ນ ເຂດທີ່ຢູ່ອາໄສ, ເຂດວັດທະນະທຳ, ເຂດມໍລະດົກ, ເຂດອຸດສາຫະກຳ, ເຂດທີ່ຕັ້ງສາງ, ເຂດການຄ້າ, ທ່າເຮືອ, ສະໜາມບິນ, ສະຖານີຂົນສົ່ງ.

ຕົວເມືອງໜຶ່ງ ອາດມີໜຶ່ງ ຫຼື ຫຼາຍແຜນຜັງຈັດສັນເຂດ.

**ມາດຕາ 43 (ໃໝ່) ແຜນຜັງຈັດສັນຄຸ້ມຄືນໃໝ່**

ແຜນຜັງຈັດສັນຄຸ້ມຄືນໃໝ່ ແມ່ນ ເອກະສານທີ່ກຳນົດການຈັດສັນຄຸ້ມເກົ່າທີ່ຊຸດໂຊມ ຫຼື ບໍ່ໄດ້ມາດຕະຖານ ລວມທັງການຮື້ຖອນ ແລະ ທັບມ້າງບາງສ່ວນ ຫຼື ທັງໝົດ ດ້ວຍການປະເມີນການນຳໃຊ້ທີ່ດິນ, ການຈັດສັນທີ່ດິນ, ສິ່ງປຸກສ້າງ, ລະບົບໂຄງລ່າງພື້ນຖານທາງດ້ານເຕັກນິກ ແລະ ສັງຄົມ ແລະ ສະພາບສິ່ງແວດລ້ອມ ໃນປັດຈຸບັນ ເພື່ອກຳນົດທິດທາງແກ້ໄຂການນຳໃຊ້ທີ່ດິນໃຫ້ເໝາະສົມ ແລະ ມີປະສິດທິຜົນທາງດ້ານເສດຖະກິດ-ສັງຄົມ ຮັບປະກັນຕອບສະໜອງຄວາມຮຽກຮ້ອງຕ້ອງການ ໃນການນຳໃຊ້ໂຄງລ່າງພື້ນຖານທາງດ້ານເຕັກນິກ ແລະ ສັງຄົມ, ປົກປັກຮັກສາ ແລະ ສົ່ງເສີມເອກະລັກທາງດ້ານສະຖາປັດຕະຍະກຳ, ພູມິທັດ, ທັດສະນີຍະພາບຂອງຕົວເມືອງ ໃຫ້ມີຄວາມສົມດຸນ ແລະ ຍືນຍົງ.

**ມາດຕາ 44 (ໃໝ່) ແຜນຜັງສ້າງຄຸ້ມໃໝ່**

ແຜນຜັງສ້າງຄຸ້ມໃໝ່ ແມ່ນ ເອກະສານທີ່ກຳນົດການຈັດສັນທີ່ດິນ ເພື່ອສ້າງຄຸ້ມໃໝ່ໃຫ້ຊຸມຊົນເຂົ້າມາຢູ່ຊຶ່ງເປັນຮູບແບບໜຶ່ງ ຂອງການພັດທະນາຕົວເມືອງ ໃນພື້ນທີ່ເປົ່າຫວ່າງຢູ່ໃນເຂດຕົວເມືອງ, ເຂດຊານເມືອງ ແລະ ເຂດຊົນນະບົດເພື່ອຫຼຸດຜ່ອນຄວາມແອອັດ ແລະ ຄວາມສັບສົນຂອງຕົວເມືອງໃຫຍ່.

**ມາດຕາ 45 (ໃໝ່) ແຜນຜັງຈັດແບ່ງຕອນດິນປຸກສ້າງ**

ແຜນຜັງຈັດແບ່ງຕອນດິນປຸກສ້າງ ແມ່ນ ເອກະສານທີ່ກຳນົດການຈັດແບ່ງຕອນດິນ ໃຫ້ມີປະສິດທິຜົນ, ຮັບປະກັນການເຊື່ອມຈອດກັບລະບົບໂຄງລ່າງພື້ນຖານທາງດ້ານເຕັກນິກ ແລະ ສັງຄົມ ໂດຍສະເພາະເສັ້ນທາງເຂົ້າ-ອອກ, ນໍ້າປະປາ, ການລະບາຍນໍ້າ, ໄຟຟ້າ, ແສງສະຫວ່າງສາທາລະນະ, ໂທລະຄົມມະນາຄົມໃຫ້ຖືກຕ້ອງ ແລະ ສອດຄ່ອງກັບແຜນຜັງລວມ, ຮັບປະກັນໃຫ້ຕົວເມືອງມີຄວາມສວຍງາມ, ສະດວກ, ເປັນລະບຽບ ຮຽບຮ້ອຍ, ສະຫງົບ ແລະ ປອດໄພ.

ບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບສິດນຳໃຊ້ ຫຼື ໃຊ້ທີ່ດິນທີ່ມີຈຸດປະສົງປຸກສ້າງອາຄານ, ກໍ່ສ້າງລະບົບໂຄງລ່າງພື້ນຖານທາງດ້ານເຕັກນິກ ແລະ ສັງຄົມ ຢູ່ໃນພື້ນທີ່ດິນຂອງຕົນນັ້ນຕ້ອງສ້າງແຜນຜັງຈັດແບ່ງຕອນດິນ ແລະ ປະກອບເອກະສານທີ່ກ່ຽວຂ້ອງ ເພື່ອຂໍອະນຸຍາດນຳອົງການຄຸ້ມຄອງການຜັງເມືອງ.

**ມາດຕາ 46 (ໃໝ່) ແຜນຜັງຈັດຮູບທີ່ດິນ**

ແຜນຜັງຈັດຮູບທີ່ດິນ ແມ່ນ ເອກະສານທີ່ກຳນົດພື້ນທີ່ໃດໜຶ່ງ ຂອງຕົວເມືອງ ທີ່ບໍ່ເປັນລະບົບລະບຽບ ແລະ ເປັນອຸປະສັກ ຕໍ່ການພັດທະນາລະບົບໂຄງລ່າງພື້ນຖານທາງດ້ານເຕັກນິກ ແລະ ສັງຄົມ ດ້ວຍວິທີການຈັດສັນໃຫ້ແຕ່ລະຕອນດິນມີເສັ້ນທາງເຂົ້າ-ອອກ ແລະ ເຂົ້າເຖິງສິ່ງອຳນວຍຄວາມສະດວກຕ່າງໆ ຢ່າງສະດວກສະບາຍ. ໃນການຈັດສັນ ຜູ້ທີ່ໄດ້ຮັບສິດນຳໃຊ້ດິນແຕ່ລະຕອນໃນພື້ນທີ່ດັ່ງກ່າວ ຕ້ອງໄດ້ປະກອບສ່ວນເນື້ອທີ່ສ່ວນໜຶ່ງເຂົ້າໃນການພັດທະນາໂຄງລ່າງພື້ນຖານທາງດ້ານເຕັກນິກ ແລະ ສັງຄົມ ຕາມອັດຕາສ່ວນທີ່ຈຳເປັນ.

**ມາດຕາ 47 (ໃໝ່) ເອກະສານແຜນຜັງລະອຽດ**

ເອກະສານແຜນຜັງລະອຽດ ປະກອບດ້ວຍ:

1. ບົດລາຍງານ;
2. ລະບຽບການນຳໃຊ້ທີ່ດິນຜັງເມືອງ;
3. ພື້ນແຜນທີ່ ແລະ ແຜນຜັງເຕັກນິກ;
4. ຮູບຈຳລອງ ແລະ/ຫຼື ພາບສາມມິຕິ.

ບົດລາຍງານ, ລະບຽບການນຳໃຊ້ທີ່ດິນຜັງເມືອງ, ພື້ນແຜນທີ່ ແລະ ແຜນຜັງເຕັກນິກ ແລະ ຮູບຈຳລອງ ແລະ/ຫຼື ພາບສາມມິຕິຂອງແຜນຜັງລະອຽດ ມີເນື້ອໃນດັ່ງດຽວກັນກັບເອກະສານແຜນຜັງລວມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 20, 21, 22 ແລະ 23 ຂອງກົດໝາຍສະບັບນີ້, ແຜນຜັງລະອຽດມີເນື້ອໃນລະອຽດກວ່າແຜນຜັງລວມ ແລະ ມີລັກສະນະສະເພາະ ໃນແຕ່ລະເຂດຂອງຕົວເມືອງ.

**ມາດຕາ 48 (ໃໝ່) ການສ້າງ ແລະ ຮັບຮອງເອົາແຜນຜັງລະອຽດ**

ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ເປັນຜູ້ຄົ້ນຄວ້າສ້າງແຜນຜັງລະອຽດຂອງຕົວເມືອງຂອງ ນະຄອນຫຼວງ, ນະຄອນ, ເທດສະບານ ແລະ ເມືອງ ໂດຍປະສານສົມທົບກັບພະແນກການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລ້ວນຳສະເໜີຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເພື່ອນຳສະເໜີຕໍ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ພິຈາລະນາຮັບຮອງເອົາ.

ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ ເປັນຜູ້ຄົ້ນຄວ້າສ້າງແຜນຜັງລະອຽດຂອງເຂດຊຸມຊົນເມືອງ ໂດຍປະສານສົມທົບກັບຫ້ອງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລ້ວນໍາສະເໜີຕໍ່ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ພິຈາລະນາຮັບຮອງເອົາ.

## ພາກທີ III
## ລະບຽບການຜັງເມືອງ
### ໝວດທີ 1
### ທີ່ດິນຜັງເມືອງ

**ມາດຕາ 49 (ປັບປຸງ) ທີ່ດິນຜັງເມືອງ**

ທີ່ດິນຜັງເມືອງ ແມ່ນ ຂອບເຂດພື້ນທີ່ດິນ ຊຶ່ງກໍານົດໄວ້ສໍາລັບການວາງ ຫຼື ການສ້າງແຜນຜັງເມືອງເພື່ອພັດທະນາໃຫ້ເປັນຕົວເມືອງ.

ທີ່ດິນຜັງເມືອງ ປະກອບດ້ວຍ ທີ່ດິນປະເພດຕ່າງໆ ໃນເຂດວາງແຜນຜັງຕົວເມືອງ.

**ມາດຕາ 50 (ປັບປຸງ) ການສະຫງວນທີ່ດິນຜັງເມືອງ**

ລັດ ມີສິດ ສະຫງວນທີ່ດິນຜັງເມືອງ ເພື່ອພັດທະນາລະບົບໂຄງລ່າງພື້ນຖານທາງດ້ານເຕັກນິກ ແລະ ສັງຄົມ, ປົກປັກຮັກສາສິ່ງແວດລ້ອມທາງດ້ານທໍາມະຊາດ ແລະ ສັງຄົມ ພ້ອມທັງຮັບປະກັນຄວາມປອດໄພທາງດ້ານຊີວິດ ແລະ ຊັບສິນຂອງປະຊາຊົນ ແລະ ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

**ມາດຕາ 51 (ໃໝ່) ການເວນຄືນທີ່ດິນຜັງເມືອງ**

ລັດ ສາມາດເວນຄືນທີ່ດິນຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ທີ່ມີສິດນໍາໃຊ້ເມື່ອມີຄວາມຈໍາເປັນໃນການພັດທະນາ ເພື່ອຮັບໃຊ້ສາທາລະນະປະໂຫຍດ ແຕ່ຕ້ອງໄດ້ທົດແທນ ແລະ ຊົດເຊີຍຕາມກົດໝາຍ.

ການເວນຄືນທີ່ດິນເຂົ້າໃນໂຄງການພັດທະນາຄຸ້ມໃໝ່ ຫຼື ໂຄງການອະສັງຫາຣິມະຊັບຕ່າງໆ ຂອງຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ ຕ້ອງໄດ້ມີການຊົດເຊີຍຕາມຄວາມເໝາະສົມ, ເປັນທໍາບົນພື້ນຖານຕ່າງຝ່າຍຕ່າງມີຜົນປະໂຫຍດ.

**ມາດຕາ 52 (ໃໝ່) ການນໍາໃຊ້ທີ່ດິນຜັງເມືອງ**

ການນໍາໃຊ້ທີ່ດິນຜັງເມືອງ ຕ້ອງໃຫ້ຖືກຕ້ອງ ແລະ ສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ປະເພດທີ່ດິນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍສະບັບນີ້, ກົດໝາຍອື່ນທີ່ກ່ຽວຂ້ອງ ແລະ ລະບຽບການນໍາໃຊ້ທີ່ດິນຂອງແຜນຜັງລວມ ແລະ ແຜນຜັງລະອຽດໃນແຕ່ລະພື້ນທີ່ ແລະ ແຕ່ລະເຂດ.

**ມາດຕາ 53 (ໃໝ່) ການນໍາໃຊ້ທີ່ດິນຜັງເມືອງໃນເຂດທີ່ມີຄວາມສ່ຽງ**

ໃນກໍລະນີ ທີ່ມີຄວາມຈໍາເປັນຕ້ອງນໍາໃຊ້ທີ່ດິນຜັງເມືອງ ເພື່ອກໍ່ສ້າງອາຄານ ຫຼື ລະບົບໂຄງລ່າງພື້ນຖານທາງດ້ານເຕັກນິກ ແລະ ສັງຄົມ ໃນເຂດທີ່ມີຄວາມສ່ຽງຈາກໄພພິບັດທໍາມະຊາດ ຫຼື ການກະທໍາຂອງຄົນ ຕ້ອງເລືອກເອົາ

ພື້ນທີ່ ທີ່ມີຜົນກະທົບໜ້ອຍທີ່ສຸດ ພ້ອມກັນນັ້ນກໍຕ້ອງມີແຜນການ ແລະ ມາດຕະການປ້ອງກັນເພື່ອຫຼີກເວັ້ນຜົນກະທົບທີ່ອາດຈະເກີດຂຶ້ນ.

## ໝວດທີ 2
## ການສ້າງແຜນຜັງລວມສຳລັບຕົວເມືອງທີ່ບໍ່ທັນມີແຜນຜັງຕົວເມືອງ, ຕົວເມືອງທີ່ສ້າງຄືນໃໝ່ ຫຼື ສ້າງໃໝ່

### ມາດຕາ 54 (ປັບປຸງ) ການສ້າງແຜນຜັງລວມ ສຳລັບຕົວເມືອງທີ່ບໍ່ທັນມີແຜນຜັງຕົວເມືອງ

ການສ້າງແຜນຜັງລວມ ສຳລັບຕົວເມືອງທີ່ບໍ່ທັນມີແຜນຜັງຕົວເມືອງ ຕ້ອງອີງໃສ່ສະພາບຕົວຈິງຂອງຕົວເມືອງນັ້ນ ດ້ວຍການຕີລາຄາ, ປະເມີນສິ່ງກໍ່ສ້າງທີ່ມີຄຸນຄ່າທາງດ້ານສະຖາປັດຕະຍະກຳ, ສິ່ງທີ່ເປັນມໍລະດົກທາງດ້ານວັດທະນະທຳ, ປະຫວັດສາດ, ທຳມະຊາດ ລວມທັງທັດສະນີຍະພາບທີ່ມີຢູ່ແລ້ວ ເພື່ອສຳຫຼວດ-ອອກແບບ ແລະ ສ້າງແຜນຜັງລວມຊຶ່ງແບ່ງອອກເປັນ ສາມກຸ່ມ ດັ່ງນີ້:

1. ສິ່ງກໍ່ສ້າງທີ່ຄວນຮັກສາໄວ້;
2. ສິ່ງກໍ່ສ້າງທີ່ຄວນປັບປຸງຄືນໃໝ່;
3. ສິ່ງທີ່ຄວນກໍ່ສ້າງໃໝ່.

ສຳລັບການສ້າງແຜນຜັງຈັດສັນເຂດມໍລະດົກຂອງຕົວເມືອງ ຕ້ອງຄົ້ນຄວ້າ, ຕີລາຄາ ແລະ ປະເມີນສະພາບຕົວຈິງຂອງເຂດດັ່ງກ່າວ ແນໃສ່ຄຸ້ມຄອງ ແລະ ປົກປັກຮັກສາສິ່ງທີ່ເປັນມໍລະດົກທາງວັດທະນະທຳ, ປະຫວັດສາດ, ທຳມະຊາດ ເພື່ອເພີ່ມຄຸນຄ່າໃຫ້ມີຄວາມສວຍງາມ ແລະ ສົມດູນກັບເຂດອື່ນຂອງຕົວເມືອງ.

### ມາດຕາ 55 (ໃໝ່) ການສ້າງແຜນຜັງລວມຂອງຕົວເມືອງທີ່ສ້າງຄືນໃໝ່

ການສ້າງແຜນຜັງລວມຂອງຕົວເມືອງ ທີ່ສ້າງຄືນໃໝ່ຈາກຕົວເມືອງເກົ່າ ທີ່ຖືກທຳລາຍຈາກໄພພິບັດທຳມະຊາດ ຫຼື ການກະທຳຂອງຄົນ ຕ້ອງໃຫ້ສອດຄ່ອງກັບເນື້ອໃນທີ່ໄດ້ກຳນົດໄວ້ໃນມາດຕາ 18 ຫາ ມາດຕາ 38 ຂອງກົດໝາຍສະບັບນີ້.

### ມາດຕາ 56 (ປັບປຸງ) ການສ້າງແຜນຜັງລວມຂອງຕົວເມືອງທີ່ສ້າງໃໝ່

ການສ້າງແຜນຜັງລວມຂອງຕົວເມືອງທີ່ສ້າງໃໝ່ ໃນພື້ນທີ່ເປົ່າຫວ່າງ ຫຼື ທີ່ຍັງບໍ່ທັນເປັນຊຸມຊົນ ນອກຈາກປະຕິບັດໃຫ້ສອດຄ່ອງກັບເນື້ອໃນທີ່ໄດ້ກຳນົດໄວ້ໃນມາດຕາ 18 ຫາ ມາດຕາ 38 ຂອງກົດໝາຍສະບັບນີ້ແລ້ວ ຍັງຕ້ອງປະຕິບັດໃຫ້ໄດ້ຕາມຈຸດປະສົງ ແລະ ເປົ້າໝາຍ ດັ່ງນີ້:

1. ໃຫ້ເປັນຕົວເມືອງບໍລິວານ, ສ້າງວຽກເຮັດງານທຳໃໝ່ ເພື່ອຫຼຸດຜ່ອນພາລະຂອງຕົວເມືອງໃຫຍ່ດ້ານທີ່ຢູ່ອາໄສ, ປະຊາກອນ, ການບໍລິການ ແລະ ການປົກປັກຮັກສາສິ່ງແວດລ້ອມ;

2. ໃຫ້ເປັນຕົວເມືອງໃໝ່, ເປັນສູນກາງການປົກຄອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ການບໍລິການ, ການທ່ອງທ່ຽວ, ສູນຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີລະດັບສູງ ແລະ ອື່ນໆ;

3. ໃຫ້ເປັນຕົວເມືອງສະອາດ, ປະຢັດພະລັງງານ, ເວລາ ແລະ ຄ່າໃຊ້ຈ່າຍໃນການເດີນທາງພາຍໃນຕົວເມືອງ, ເຮັດໃຫ້ຕົວເມືອງມີຊີວິດຊີວາ ແລະ ມີສິ່ງແວດລ້ອມທີ່ດີ.

ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຄົ້ນຄວ້າສ້າງແຜນຜັງລວມຂອງຕົວເມືອງໃໝ່ ໂດຍປະສານສົມທົບກັບບັນດາຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລ້ວສະເໜີລັດຖະບານເພື່ອນໍາສະເໜີຕໍ່ສະພາແຫ່ງຊາດ ພິຈາລະນາຮັບຮອງເອົາ.

## ໝວດທີ 3
## ໃບຢັ້ງຢືນຜັງເມືອງ ແລະ ການອະນຸຍາດປຸກສ້າງ

### ມາດຕາ 57 (ໃໝ່) ໃບຢັ້ງຢືນຜັງເມືອງ

ໃບຢັ້ງຢືນຜັງເມືອງ ແມ່ນ ເອກະສານທີ່ສະໜອງຂໍ້ມູນ ກ່ຽວກັບແຜນການນໍາໃຊ້ທີ່ດິນທີ່ໄດ້ກໍານົດໄວ້ຢູ່ໃນແຜນຜັງລວມຕົວເມືອງທີ່ລັດໄດ້ຮັບຮອງ.

### ມາດຕາ 58 (ໃໝ່) ການອອກໃບຢັ້ງຢືນຜັງເມືອງ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຕ້ອງການໃບຢັ້ງຢືນຜັງເມືອງ ຕ້ອງສະເໜີລາຍລະອຽດກ່ຽວກັບທີ່ຕັ້ງຂອງຕອນດິນຂອງຕົນ ຕໍ່ອົງການຄຸ້ມຄອງການຜັງເມືອງ ເພື່ອພິຈາລະນາ.

ອົງການຄຸ້ມຄອງການຜັງເມືອງ ເປັນຜູ້ອອກໃບຢັ້ງຢືນຜັງເມືອງພາຍໃນ ສິບຫ້າວັນ ນັບແຕ່ວັນໄດ້ຮັບຄໍາສະເໜີເປັນຕົ້ນໄປ ເມື່ອເຫັນວ່າຕອນດິນດັ່ງກ່າວນັ້ນຖືກຕ້ອງ ແລະ ສອດຄ່ອງກັບແຜນຜັງນໍາໃຊ້ທີ່ດິນຂອງແຜນຜັງລວມ.

### ມາດຕາ 59 (ປັບປຸງ) ການອະນຸຍາດປຸກສ້າງ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງດໍາເນີນການກໍ່ສ້າງໃນລັກສະນະຕ່າງໆ ເຊັ່ນ ປຸກສ້າງ, ສ້າງ, ຕິດຕັ້ງ, ສ້ອມແປງ, ຕໍ່ເຕີມ, ບູລະນະ, ປະຕິສັງຂອນ, ດັດແປງ ຫຼື ທັບມ້າງ ຕ້ອງປະກອບເອກະສານຂໍອະນຸຍາດຕາມລະບຽບການ ແລ້ວຍື່ນຕໍ່ອົງການຄຸ້ມຄອງການຜັງເມືອງທີ່ກ່ຽວຂ້ອງພິຈາລະນາ.

ອົງການຄຸ້ມຄອງການຜັງເມືອງ ເປັນຜູ້ອອກໃບອະນຸຍາດປຸກສ້າງພາຍໃນ ສາມສິບວັນ ນັບແຕ່ວັນໄດ້ຮັບຄໍາສະເໜີເປັນຕົ້ນໄປ ເມື່ອເຫັນວ່າການຂໍອະນຸຍາດປຸກສ້າງດັ່ງກ່າວນັ້ນຖືກຕ້ອງ ແລະ ສອດຄ່ອງກັບແຜນຜັງລວມ ແລະ ແຜນຜັງລະອຽດທີ່ໄດ້ຖືກຮັບຮອງເອົາແລ້ວ.

## ພາກທີ IV

## ການສໍາຫຼວດ-ອອກແບບແຜນຜັງຕົວເມືອງ

### ໝວດທີ 1

### ການດໍາເນີນການສໍາຫຼວດ-ອອກແບບແຜນຜັງຕົວເມືອງ

**ມາດຕາ 60 (ໃໝ່) ການຂໍອະນຸຍາດດໍາເນີນການສໍາຫຼວດ-ອອກແບບແຜນຜັງຕົວເມືອງ**

ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດໍາເນີນທຸລະກິດສໍາຫຼວດ-ອອກແບບເຄຫະສະຖານ ຫາກມີຈຸດປະສົງດໍາເນີນການສໍາຫຼວດ-ອອກແບບແຜນຜັງຕົວເມືອງ ໃຫ້ຍື່ນຄໍາຮ້ອງຕໍ່ຂະແໜງການໂຍທາທິການ ແລະ ຂົນສົ່ງ ເພື່ອພິຈາລະນາ.

**ມາດຕາ 61 (ໃໝ່) ເງື່ອນໄຂຂອງຜູ້ຂໍອະນຸຍາດດໍາເນີນການສໍາຫຼວດ-ອອກແບບແຜນຜັງຕົວເມືອງ**

ຜູ້ຂໍອະນຸຍາດດໍາເນີນການສໍາຫຼວດ-ອອກແບບແຜນຜັງຕົວເມືອງ ຕ້ອງມີເງື່ອນໄຂຕົ້ນຕໍ ດັ່ງນີ້:

1. ເປັນນິຕິບຸກຄົນທີ່ດໍາເນີນທຸລະກິດສໍາຫຼວດ-ອອກແບບເຄຫະສະຖານ;
2. ມີສະຖາປະນິກ, ວິສະວະກອນ ແລະ ນັກວິຊາການອື່ນທີ່ກ່ຽວຂ້ອງ ກັບການຜັງເມືອງໃນຈໍານວນພຽງພໍຕາມລະບຽບການ, ມີຄຸນວຸດທິ, ມີຄວາມຮູ້, ຄວາມສາມາດ, ມີປະສົບການ ແລະ ມີຈັນຍາບັນວິຊາຊີບ;
3. ມີຖານະການເງິນດີ ຮັບປະກັນໃຫ້ການດໍາເນີນໂຄງການດັ່ງກ່າວສໍາເລັດ ແລະ ໄດ້ຮັບການຢັ້ງຢືນຈາກທະນາຄານ;
4. ມີພາຫະນະ, ວັດຖຸປະກອນ ແລະ ເຄື່ອງມືທີ່ມີຄຸນນະພາບ ແລະ ຄົບຖ້ວນຕາມລະບຽບການ.

**ມາດຕາ 62 (ໃໝ່) ສັນຍາສໍາຫຼວດ-ອອກແບບແຜນຜັງຕົວເມືອງ**

ເຈົ້າຂອງໂຄງການ ຕ້ອງເຊັນສັນຍາກັບຜູ້ສໍາຫຼວດ-ອອກແບບແຜນຜັງຕົວເມືອງ ທີ່ໄດ້ຜ່ານການຄັດເລືອກດ້ວຍການປະມູນ ແລະ ນໍາໄປຢັ້ງຢືນໃຫ້ຖືກຕ້ອງຕາມກົດໝາຍ.

**ມາດຕາ 63 (ໃໝ່) ເນື້ອໃນຂອງສັນຍາສໍາຫຼວດ-ອອກແບບແຜນຜັງຕົວເມືອງ**

ສັນຍາສໍາຫຼວດ-ອອກແບບແຜນຜັງຕົວເມືອງ ມີເນື້ອໃນ ດັ່ງນີ້:

1. ຊື່ຂອງນິຕິບຸກຄົນ ຫຼື ການຈັດຕັ້ງ ແລະ ເຈົ້າຂອງໂຄງການ;
2. ເປົ້າໝາຍ, ລາຍການໜ້າວຽກຂອງໂຄງການສໍາຫຼວດ-ອອກແບບແຜນຜັງຕົວເມືອງ;
3. ມູນຄ່າ ແລະ ວິທີການຊໍາລະຄ່າສໍາຫຼວດ-ອອກແບບແຜນຜັງຕົວເມືອງ;
4. ໄລຍະເວລາ ແລະ ຕາຕະລາງດໍາເນີນໂຄງການສໍາຫຼວດ-ອອກແບບແຜນຜັງຕົວເມືອງ;
5. ກໍານົດໝາຍ ແລະ ມາດຕະຖານເຕັກນິກກ່ຽວກັບການສໍາຫຼວດ-ອອກແບບແຜນຜັງຕົວເມືອງ;
6. ການກວດກາ, ການຮັບຮອງ ແລະ ການມອບຮັບໂຄງການສໍາຫຼວດ-ອອກແບບແຜນຜັງຕົວເມືອງ;
7. ມາດຕະການຕໍ່ການລະເມີດ ຫຼື ການບໍ່ປະຕິບັດພັນທະຂອງຄູ່ສັນຍາ;
8. ການດັດແກ້, ການຍົກເລີກ ແລະ ການສິ້ນສຸດສັນຍາ;

9. ການແກ້ໄຂຂໍ້ຂັດແຍ່ງ;

10. ພາສາທີ່ໃຊ້ໃນສັນຍາ;

11. ເນື້ອໃນອື່ນທີ່ເຫັນວ່າຈຳເປັນ.

## ໝວດທີ 2
## ສິດ ແລະ ໜ້າທີ່ຂອງເຈົ້າຂອງໂຄງການ
## ແລະ ຜູ້ສຳຫຼວດ-ອອກແບບແຜນຜັງຕົວເມືອງ

### ມາດຕາ 64 (ໃໝ່) ສິດ ແລະ ໜ້າທີ່ຂອງເຈົ້າຂອງໂຄງການ

ໃນການດຳເນີນໂຄງການສຳຫຼວດ-ອອກແບບແຜນຜັງຕົວເມືອງເຈົ້າຂອງໂຄງການ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງການປະມູນ ແລະ ເຊັນສັນຍາກັບຜູ້ສຳຫຼວດ-ອອກແບບແຜນຜັງຕົວເມືອງ ທີ່ຊະນະການປະມູນ;

2. ພິຈາລະນາຮັບຮອງເອກະສານກ່ຽວກັບການສຳຫຼວດ-ອອກແບບແຜນຜັງຕົວເມືອງ ຕາມຂະບວນການ ແລະ ແຜນດຳເນີນງານຂອງຜູ້ສຳຫຼວດ-ອອກແບບແຜນຜັງເມືອງ ຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນສັນຍາ;

3. ດັດແກ້ແບບແຜນຜັງ, ມູນຄ່າໂຄງການສຳຫຼວດ-ອອກແບບຢ່າງສົມເຫດສົມຜົນ ໃນກໍລະນີ ມີຄວາມຈຳເປັນທາງດ້ານເສດຖະກິດ-ເຕັກນິກ ຕາມການສະເໜີຂອງຜູ້ສຳຫຼວດ-ອອກແບບແຜນຜັງຕົວເມືອງ;

4. ຊຳລະຄ່າສຳຫຼວດ-ອອກແບບແຜນຜັງຕົວເມືອງ ໃຫ້ແກ່ຜູ້ສຳຫຼວດ-ອອກແບບໂດຍສອດຄ່ອງກັບສັນຍາທີ່ໄດ້ຕົກລົງກັນ;

5. ຕິດຕາມ ແລະ ກວດກາ ການດຳເນີນງານຂອງຜູ້ສຳຫຼວດ-ອອກແບບແຜນຜັງຕົວເມືອງ;

6. ແຈ້ງ, ແນະນຳ, ສັ່ງໂຈະ ຫຼື ໃຫ້ຢຸດເຊົາ ຫຼື ຍົກເລີກໂຄງການສຳຫຼວດ-ອອກແບບແຜນຜັງຕົວເມືອງ ໃນກໍລະນີຜູ້ສຳຫຼວດ-ອອກແບບຫາກລະເມີດ ຫຼື ບໍ່ປະຕິບັດຕາມສັນຍາ;

7. ສະເໜີອົງການຄຸ້ມຄອງການຜັງເມືອງທີ່ກ່ຽວຂ້ອງ ເພື່ອຂໍອະນຸມັດແຜນຜັງຕົວເມືອງ ທີ່ໄດ້ຜ່ານການສຳຫຼວດອອກແບບແລ້ວ;

8. ເກັບຮັກສາເອກະສານແຜນຜັງຕົວເມືອງ ແລະ ເອກະສານອື່ນທີ່ກ່ຽວຂ້ອງ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 65 (ໃໝ່) ສິດ ແລະ ໜ້າທີ່ຂອງຜູ້ສຳຫຼວດ-ອອກແບບແຜນຜັງຕົວເມືອງ

ໃນການດຳເນີນໂຄງການສຳຫຼວດ-ອອກແບບແຜນຜັງຕົວເມືອງ ຜູ້ສຳຫຼວດ-ອອກແບບ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງແຜນດຳເນີນງານກ່ຽວກັບການສຳຫຼວດ-ອອກແບບແຜນຜັງຕົວເມືອງ ແລ້ວສະເໜີຕໍ່ເຈົ້າຂອງໂຄງການເພື່ອຮັບຮອງເອົາ;

2. ດຳເນີນການສຳຫຼວດ-ອອກແບບແຜນຜັງຕົວເມືອງ ໃຫ້ຖືກຕ້ອງຕາມປະເພດ, ຂັ້ນຕອນ, ເນື້ອໃນ, ກຳນົດໝາຍ ແລະ ມາດຕະຖານເຕັກນິກຜັງເມືອງ;

3. ແຈ້ງໃຫ້ເຈົ້າຂອງໂຄງການຮູ້ລ່ວງໜ້າ ກ່ອນລົງມືປະຕິບັດໜ້າວຽກທີ່ສຳຄັນ ເພື່ອຕິດຕາມ ແລະ ກວດກາຕົວຈິງ;

4. ສະໜອງຂໍ້ມູນ, ເອກະສານ ທີ່ຈຳເປັນ ແລະ ຖືກຕ້ອງໃຫ້ແກ່ເຈົ້າຂອງໂຄງການ, ອົງການຄຸ້ມຄອງການຜັງເມືອງຕາມວັນເວລາທີ່ໄດ້ຕົກລົງກັນ;

5. ໄດ້ຮັບຄ່າສຳຫຼວດ-ອອກແບບແຜນຜັງຕົວເມືອງ ຕາມມູນຄ່າທີ່ໄດ້ກຳນົດໄວ້ໃນສັນຍາ;

6. ສະເໜີດັດແກ້ແຜນຜັງຕົວເມືອງ ແລະ ມູນຄ່າໂຄງການຕາມສັນຍາ ແລະ ກົດໝາຍ;

7. ຮັບຜິດຊອບໃຊ້ແທນຄ່າເສຍຫາຍທີ່ເກີດຂຶ້ນຍ້ອນການລະເມີດ ຫຼື ການບໍ່ປະຕິບັດສັນຍາ;

8. ມອບທຸກເອກະສານກ່ຽວກັບການສຳຫຼວດ-ອອກແບບແຜນຜັງຕົວເມືອງ ແລະ ເອກະສານອື່ນທີ່ກ່ຽວຂ້ອງໃຫ້ເຈົ້າຂອງໂຄງການ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ V
## ຂໍ້ຫ້າມ

### ມາດຕາ 66 (ໃໝ່) ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດກ່ຽວກັບການສຳຫຼວດ-ອອກແບບແຜນຜັງຕົວເມືອງ ໂດຍບໍ່ມີໃບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ;

2. ຂັດຂວາງການດຳເນີນການສຳຫຼວດ-ອອກແບບແຜນຜັງຕົວເມືອງໂດຍບໍ່ມີເຫດຜົນ ຫຼື ບໍ່ໃຫ້ຄວາມສະດວກ ຫຼື ການຮ່ວມມື;

3. ນຳໃຊ້ທີ່ດິນທີ່ຂັດກັບກົດໝາຍວ່າດ້ວຍການຜັງເມືອງ;

4. ສ້າງ, ດັດແກ້, ປ່ຽນແປງ ຫຼື ປັບປຸງແຜນຜັງຕົວເມືອງໂດຍບໍ່ຖືກຕ້ອງຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດໝາຍ;

5. ຂຸດດິນ, ຖົມດິນ ແລະ ການກໍ່ສ້າງຕ່າງໆ ຊຶ່ງເປັນການບຸກລຸກເຂດຫວງຫ້າມທີ່ກຳນົດໄວ້ຢູ່ໃນແຜນຜັງຕົວເມືອງ;

6. ດັດແປງສະພາບຕົວຈິງຂອງໜ້າດິນ, ສິ່ງປຸກສ້າງ ແລະ ສະພາບແວດລ້ອມທຳມະຊາດ ທີ່ຢູ່ໃນການຄຸ້ມຄອງ ແລະ ນຳໃຊ້ຂອງຕົນ ຊຶ່ງພາໃຫ້ມີການປ່ຽນແປງເຂດນຳໃຊ້ທີ່ດິນຕາມທີ່ໄດ້ກຳນົດໄວ້ໃນແຜນຜັງຕົວເມືອງ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

### ມາດຕາ 67 (ໃໝ່) ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ຜັງເມືອງ ແລະ ເຈົ້າໜ້າທີ່ອື່ນ

ຫ້າມ ພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ຜັງເມືອງ ແລະ ເຈົ້າໜ້າທີ່ອື່ນ ມີ ພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດ, ເປັນທີ່ປຶກສາ ຫຼື ເປັນພະນັກງານວິຊາການ ໃຫ້ຜູ້ດຳເນີນທຸລະກິດການສຳຫຼວດ-ອອກແບບແຜນຜັງຕົວເມືອງ ທີ່ພົວພັນກັບຄວາມຮັບຜິດຊອບຂອງຕົນ;

2. ເປີດເຜີຍຄວາມລັບ ກ່ຽວກັບການປະມູນວຽກງານສໍາຫຼວດ-ອອກແບບແຜນຜັງຕົວເມືອງ ແລະ ໂຄງການພັດທະນາຕົວເມືອງ;

3. ເມີນເສີຍຕໍ່ຄວາມຮັບຜິດຊອບຂອງຕົນ, ກີດໜ່ວງຖ່ວງດຶງເອກະສານຜັງເມືອງ ແລະ ເມີນເສີຍຕໍ່ການກະທໍາທີ່ບໍ່ຖືກຕ້ອງຂອງຜູ້ສໍາຫຼວດ-ອອກແບບ;

4. ອະນຸຍາດປຸກສ້າງ ໂດຍຂັດກັບກົດໝາຍວ່າດ້ວຍການຜັງເມືອງ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;

5. ກໍານົດແຜນຜັງຕົວເມືອງ ທີ່ບໍ່ສອດຄ່ອງກັບສະພາບແວດລ້ອມສັງຄົມ ເຊັ່ນ ຈັດບ່ອນຖິ້ມຂີ້ເຫຍື້ອໃກ້ຊຸມຊົນ;

6. ໃຫ້, ຂໍເອົາ, ທວງເອົາ ຫຼື ຮັບສິນບົນ ໃນການດໍາເນີນການສໍາຫຼວດ-ອອກແບບແຜນຜັງຕົວເມືອງ;

7. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 68 (ໃໝ່) ຂໍ້ຫ້າມສໍາລັບເຈົ້າຂອງໂຄງການ**

ຫ້າມ ເຈົ້າຂອງໂຄງການ ມີ ພຶດຕິກໍາ ດັ່ງນີ້:

1. ສົມຮູ້ຮ່ວມຄິດກັບພະນັກງານ, ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ຫຼື ຜູ້ສໍາຫຼວດ-ອອກແບບໃນການຢັ້ງຢືນ ແລະ ຮັບຮອງເອົາຜົນການສໍາຫຼວດ-ອອກແບບແຜນຜັງຕົວເມືອງ ທີ່ບໍ່ຖືກຕ້ອງ;

2. ແກ່ຍາວເວລາໃນການຊໍາລະຄ່າສໍາຫຼວດ-ອອກແບບແຜນຜັງຕົວເມືອງ ໂດຍບໍ່ມີເຫດຜົນ;

3. ກີດໜ່ວງຖ່ວງດຶງການຮັບຮອງເອົາຜົນສໍາຫຼວດ-ອອກແບບແຜນຜັງຕົວເມືອງທີ່ສໍາເລັດແລ້ວ;

4. ເມີນເສີຍຕໍ່ການຕິດຕາມ ແລະ ກວດກາການປະຕິບັດວຽກງານຂອງຜູ້ສໍາຫຼວດ-ອອກແບບແຜນຜັງຕົວເມືອງ;

5. ໃຫ້, ຂໍເອົາ, ທວງເອົາ ຫຼື ຮັບສິນບົນໃນການດໍາເນີນການສໍາຫຼວດ-ອອກແບບແຜນຜັງຕົວເມືອງ;

6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 69 (ໃໝ່) ຂໍ້ຫ້າມສໍາລັບຜູ້ສໍາຫຼວດ-ອອກແບບແຜນຜັງຕົວເມືອງ**

ຫ້າມ ຜູ້ສໍາຫຼວດ-ອອກແບບແຜນຜັງຕົວເມືອງ ມີ ພຶດຕິກໍາ ດັ່ງນີ້:

1. ດໍາເນີນການສໍາຫຼວດ-ອອກແບບແຜນຜັງຕົວເມືອງ ນອກຈາກເນື້ອໃນທີ່ໄດ້ມີການຕົກລົງກັນໄວ້ໃນສັນຍາ;

2. ສໍາຫຼວດ-ອອກແບບແຜນຜັງຕົວເມືອງ ໂດຍບໍ່ຖືກຕ້ອງຕາມປະເພດ, ເນື້ອໃນ, ກໍານົດໝາຍ ແລະ ມາດຕະຖານເຕັກນິກຜັງເມືອງ;

3. ຂາຍ ຫຼື ມອບໂອນໂຄງການສໍາຫຼວດ-ອອກແບບແຜນຜັງຕົວເມືອງໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງໂຄງການ;

4. ປະລະວຽກງານ ຫຼື ໂຄງການສໍາຫຼວດ-ອອກແບບແຜນຜັງຕົວເມືອງ ທີ່ຕົນໄດ້ເຊັນສັນຍາກັບເຈົ້າຂອງໂຄງການ;

5. ນໍາໃຊ້ຂໍ້ມູນທີ່ບໍ່ຖືກຕ້ອງ ເພື່ອຫຼຸດຜ່ອນຄ່າໃຊ້ຈ່າຍ ແລະ ເວລາຂອງການສໍາຫຼວດ-ອອກແບບແຜນຜັງຕົວເມືອງ;

6. ໃຫ້, ຂໍເອົາ, ທວງເອົາ ຫຼື ຮັບສິນບົນ ໃນການດໍາເນີນການສໍາຫຼວດ-ອອກແບບແຜນຜັງຕົວເມືອງ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VI
## ການແກ້ໄຂຂໍ້ຂັດແຍ່ງ

### ມາດຕາ 70 (ປັບປຸງ) ຮູບການແກ້ໄຂຂໍ້ຂັດແຍ່ງ

ການແກ້ໄຂຂໍ້ຂັດແຍ່ງອາດດຳເນີນດ້ວຍຮູບການໃດໜຶ່ງ ດັ່ງນີ້:

1. ການໄກ່ເກ່ຍ ຫຼື ການປະນີປະນອມ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການຕັດສິນຂອງສານ;
5. ການແກ້ໄຂທີ່ມີລັກສະນະສາກົນ.

### ມາດຕາ 71 (ໃໝ່) ການໄກ່ເກ່ຍ ຫຼື ການປະນີປະນອມ

ໃນກໍລະນີ ເກີດຂໍ້ຂັດແຍ່ງກ່ຽວກັບການຜັງເມືອງນັ້ນ ຄູ່ກໍລະນີສາມາດ ເຈລະຈາ, ໄກ່ເກ່ຍ ຫຼື ປະນີປະນອມກັນ.

### ມາດຕາ 72 (ໃໝ່) ການແກ້ໄຂທາງດ້ານບໍລິຫານ

ໃນກໍລະນີ ເກີດຂໍ້ຂັດແຍ່ງກ່ຽວກັບການຜັງເມືອງນັ້ນ ຄູ່ກໍລະນີ ມີສິດສະເໜີຕໍ່ຂະແໜງການທີ່ກ່ຽວຂ້ອງ ບ່ອນຕົນໄດ້ຮັບອະນຸຍາດນັ້ນ ເປັນຜູ້ແກ້ໄຂຕາມກົດໝາຍ.

### ມາດຕາ 73 (ໃໝ່) ການແກ້ໄຂໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ໃນກໍລະນີ ເກີດຂໍ້ຂັດແຍ່ງກ່ຽວກັບການດຳເນີນທຸລະກິດການຜັງເມືອງນັ້ນ ຄູ່ກໍລະນີ ມີສິດສະເໜີຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອພິຈາລະນາແກ້ໄຂຕາມກົດໝາຍ.

### ມາດຕາ 74 (ໃໝ່) ການຕັດສິນຂອງສານ

ໃນກໍລະນີ ເກີດຂໍ້ຂັດແຍ່ງກ່ຽວກັບການຜັງເມືອງນັ້ນ ຄູ່ກໍລະນີຝ່າຍໃດຝ່າຍໜຶ່ງ ມີສິດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາຕັດສິນຕາມກົດໝາຍ.

### ມາດຕາ 75 (ໃໝ່) ການແກ້ໄຂທີ່ມີລັກສະນະສາກົນ

ໃນກໍລະນີ ເກີດຂໍ້ຂັດແຍ່ງທີ່ມີລັກສະນະສາກົນກ່ຽວກັບການຜັງເມືອງນັ້ນ ໃຫ້ປະຕິບັດຕາມສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

# ພາກທີ VII

# ການຄຸ້ມຄອງ ແລະ ກວດກາການຜັງເມືອງ

## ໝວດທີ 1

## ການຄຸ້ມຄອງການຜັງເມືອງ

**ມາດຕາ 76 (ປັບປຸງ) ອົງການຄຸ້ມຄອງການຜັງເມືອງ**

ລັດຖະບານ ເປັນຜູ້ຄຸ້ມຄອງການຜັງເມືອງຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຕາມການແບ່ງຂັ້ນຄຸ້ມຄອງ.

ອົງການຄຸ້ມຄອງການຜັງເມືອງ ປະກອບດ້ວຍ:

1. ກະຊວງໂຍທາທິການ ແລະ ຂົນສົ່ງ;
2. ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ;
3. ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ;
4. ອົງການປົກຄອງບ້ານ.

**ມາດຕາ 77 (ປັບປຸງ) ສິດ ແລະ ໜ້າທີ່ຂອງກະຊວງໂຍທາທິການ ແລະ ຂົນສົ່ງ**

ໃນການຄຸ້ມຄອງການຜັງເມືອງກະຊວງໂຍທາທິການ ແລະ ຂົນສົ່ງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບການຜັງເມືອງ ເພື່ອສະເໜີລັດຖະບານພິຈາລະນາ;

2. ຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ ແລະ ແຜນແມ່ບົດກ່ຽວກັບການຜັງເມືອງ ເປັນແຜນການ, ແຜນງານ ແລະ ໂຄງການລະອຽດ;

3. ຄົ້ນຄວ້າສ້າງແຜນຜັງລວມຕົວເມືອງຂອງນະຄອນຫຼວງ ແລະ ຕົວເມືອງໃໝ່ ເພື່ອສະເໜີລັດຖະບານພິຈາລະນາ;

4. ໂຄສະນາ, ເຜີຍແຜ່ນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍວ່າດ້ວຍການຜັງເມືອງ;

5. ຊີ້ນຳ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ແຜນຜັງເມືອງ, ກົດໝາຍ, ແຜນການລົງທຶນກ່ຽວກັບການຜັງເມືອງ;

6. ພິຈາລະນາກ່ຽວກັບການອະນຸຍາດດຳເນີນການສຳຫຼວດ-ອອກແບບແຜນຜັງຕົວເມືອງ ແລະ ການປຸກສ້າງທີ່ມີຜົນກະທົບຕໍ່ສິ່ງແວດລ້ອມຕົວເມືອງສູງ;

7. ຄົ້ນຄວ້າກຳນົດໝາຍ ແລະ ມາດຕະຖານເຕັກນິກກ່ຽວກັບການຜັງເມືອງ, ຄົ້ນຄວ້າ ແລະ ເລືອກເຟັ້ນເຕັກໂນໂລຊີທີ່ເໝາະສົມ ພ້ອມທັງອອກບົດແນະນຳໃນການຈັດຕັ້ງປະຕິບັດ;

8. ຄຸ້ມຄອງ, ນຳໃຊ້, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ເຈົ້າໜ້າທີ່ຜັງເມືອງ;

9. ສ້າງ, ຍົກລະດັບ ໃຫ້ບຸກຄະລາກອນກ່ຽວກັບການຜັງເມືອງ;

10. ຄົ້ນຄວ້າ, ມີຄຳເຫັນກ່ຽວກັບການລົງທຶນ, ການອະນຸມັດ, ການໂຈະ, ການຍົກເລີກໂຄງການສຳຫຼວດ-ອອກແບບແຜນຜັງລວມຂອງນະຄອນຫຼວງ;

11. ຕິດຕາມ ແລະ ປະເມີນຜົນກ່ຽວກັບການຈັດຕັ້ງປະຕິບັດແຜນຜັງຕົວເມືອງທຸກລະດັບ ໃນຂອບເຂດທົ່ວປະເທດ;

12. ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ກ່ຽວກັບການຜັງເມືອງ;

13. ພົວພັນ ແລະ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບການຜັງເມືອງ;

14. ສະຫຼຸບ, ລາຍງານຜົນຂອງການຈັດຕັ້ງປະຕິບັດການຜັງເມືອງ ໃຫ້ລັດຖະບານຢ່າງເປັນປົກກະຕິ;

15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 78 (ປັບປຸງ) ສິດ ແລະ ໜ້າທີ່ຂອງພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງການຜັງເມືອງ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ແຜນແມ່ບົດ, ແຜນພັດທະນາກ່ຽວກັບການຜັງເມືອງ, ກົດໝາຍ ແລະ ລະບຽບການ;

2. ໂຄສະນາ, ເຜີຍແຜ່ນະໂຍບາຍ, ແຜນຍຸດທະສາດ, ແຜນແມ່ບົດ, ແຜນພັດທະນາຕົວເມືອງ, ກົດໝາຍ ແລະ ລະບຽບການ;

3. ຄົ້ນຄວ້າສ້າງແຜນຜັງລວມ ແລະ ແຜນຜັງລະອຽດ;

4. ຊີ້ນຳ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດແຜນຜັງຕົວເມືອງ;

5. ສຳຫຼວດເກັບກຳຂໍ້ມູນ, ສະຖິຕິກ່ຽວກັບການຜັງເມືອງ ພ້ອມທັງຕິດຕາມ ແລະ ປະເມີນຜົນກ່ຽວກັບການຈັດຕັ້ງປະຕິບັດແຜນຜັງຕົວເມືອງ;

6. ຄົ້ນຄວ້າ, ມີຄຳເຫັນກ່ຽວກັບການລົງທຶນ, ການອະນຸມັດ, ໂຈະ, ຍົກເລີກໂຄງການສຳຫຼວດ-ອອກແບບແຜນຜັງລວມ, ແຜນຜັງລະອຽດ;

7. ພິຈາລະນາກ່ຽວກັບການປຸກສ້າງທີ່ມີຜົນກະທົບຕໍ່ແຜນຜັງຕົວເມືອງ ເຊັ່ນ ການກໍ່ສ້າງຢູ່ໃນເຂດທີ່ມີຄວາມສ່ຽງຈາກໄພພິບັດທຳມະຊາດ, ເຂດພູເຂົາ, ເຂດແຄມນ້ຳ, ເຂດຫ້ວຍ, ໜອງ, ຄອງ, ບຶງ, ເຂດຊຸ່ມຊື່ນ, ເຂດຂຽວ, ເຂດປ່າໄມ້, ເຂດສະໜາມບິນ, ສະຖານີຂົນສົ່ງ;

8. ອອກໃບຢັ້ງຢືນຜັງເມືອງ, ໃບອະນຸຍາດປຸກສ້າງ ແລະ ໃບຢັ້ງຢືນຄວາມຖືກຕ້ອງຂອງສິ່ງປຸກສ້າງພ້ອມທັງຕິດຕາມການນຳໃຊ້ສິ່ງປຸກສ້າງດັ່ງກ່າວໃຫ້ຖືກຕ້ອງຕາມລະບຽບການຜັງເມືອງ;

9. ນຳໃຊ້ກຳນົດໝາຍ ແລະ ມາດຕະຖານເຕັກນິກກ່ຽວກັບການຜັງເມືອງ ພ້ອມທັງອອກຄຳແນະນຳໃນການຈັດຕັ້ງປະຕິບັດ;

10. ສະເໜີອົງການປົກຄອງແຂວງ, ນະຄອນຫຼວງ ແຕ່ງຕັ້ງ, ຍົກຍ້າຍ ແລະ ປົດຕຳແໜ່ງ ເຈົ້າໜ້າທີ່ຜັງເມືອງ;

11. ສະເໜີສ້າງ, ບຳລຸງ, ຍົກລະດັບບຸກຄະລາກອນກ່ຽວກັບການຜັງເມືອງ;

12. ພົວພັນ ແລະ ຮ່ວມມືກັບຕ່າງປະເທດພາກພື້ນ ແລະ ສາກົນ ກ່ຽວກັບການຜັງເມືອງຕາມການມອບໝາຍຂອງຂັ້ນເທິງ;

13. ສະຫຼຸບ, ລາຍງານການເຄື່ອນໄຫວການຜັງເມືອງໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ, ອົງການປົກຄອງແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ.

**ມາດຕາ 79 (ປັບປຸງ) ສິດ ແລະ ໜ້າທີ່ຂອງຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງການຜັງເມືອງຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເຜີຍແຜ່ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ແຜນແມ່ບົດ, ແຜນພັດທະນາການຜັງເມືອງ, ກົດໝາຍ;

2. ຮັບຜິດຊອບແຜນຜັງຕົວເມືອງ ແລະ ຮັບຮອງເອົາບໍລິສັດທີ່ປຶກສາ, ຜູ້ຮັບເໝົາຕາມທີ່ໄດ້ກຳນົດໄວ້ໃນມາດຕາ 64 ຂອງກົດໝາຍສະບັບນີ້ ແລະ ຕາມການມອບໝາຍຂອງພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ນະຄອນຫຼວງ;

3. ຕິດຕາມກວດກາການຈັດຕັ້ງປະຕິບັດແຜນຜັງຕົວເມືອງ;

4. ອອກໃບຢັ້ງຢືນຜັງເມືອງ, ໃບອະນຸຍາດປຸກສ້າງ ແລະ ໃບຢັ້ງຢືນຄວາມຖືກຕ້ອງຂອງສິ່ງປຸກສ້າງພ້ອມທັງຕິດຕາມການນຳໃຊ້ສິ່ງປຸກສ້າງດັ່ງກ່າວ ໃຫ້ຖືກຕ້ອງຕາມລະບຽບການຜັງເມືອງ;

5. ຄົ້ນຄວ້າ ແລະ ມີຄຳເຫັນກ່ຽວກັບການລົງທຶນໂຄງການກິດຈະການຜັງເມືອງ, ສະເໜີໂຈະ ແລະ ຍົກເລີກໂຄງການລົງທຶນ;

6. ຂື້ນແຜນງົບປະມານ ແລະ ຄົ້ນຄວ້າສ້າງແຜນຜັງລວມ, ແຜນຜັງລະອຽດຂອງຊຸມຊົນເມືອງ;

7. ຄຸ້ມຄອງຜັງເມືອງ ແລະ ເຂດຫວງຫ້າມທີ່ກຳນົດໄວ້ຢູ່ໃນພື້ນທີ່ການວາງແຜນຜັງຕົວເມືອງ;

8. ສຳຫຼວດ, ເກັບກຳຂໍ້ມູນ, ສະຖິຕິກ່ຽວກັບການຜັງເມືອງ;

9. ສະເໜີສ້າງ, ບຳລຸງ, ຍົກລະດັບບຸກຄະລາກອນກ່ຽວກັບການຜັງເມືອງ;

10. ສະຫຼຸບ ແລະ ລາຍງານການເຄື່ອນໄຫວການຜັງເມືອງໃຫ້ພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ນະຄອນຫຼວງ ແລະ ອົງການປົກຄອງເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 80 (ປັບປຸງ) ສິດ ແລະ ໜ້າທີ່ຂອງອົງການປົກຄອງບ້ານ**

ໃນການຄຸ້ມຄອງການຜັງເມືອງອົງການປົກຄອງບ້ານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເຜີຍແຜ່, ຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ, ຄຳແນະນຳກ່ຽວກັບການຜັງເມືອງ;

2. ປຸກລະດົມປະຊາຊົນໃຫ້ມີສ່ວນຮ່ວມໃນການຜັງເມືອງ;

3. ລາຍງານສະພາບການປຸກສ້າງ ແລະ ສະພາບການອື່ນກ່ຽວກັບການຜັງເມືອງຕໍ່ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ ແລະ ອົງການປົກຄອງເມືອງ, ເທດສະບານ, ນະຄອນ;

4. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 81 (ໃໝ່) ສິດ ແລະ ໜ້າທີ່ຂອງຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ**

ໃນການຄຸ້ມຄອງການຜັງເມືອງ ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ມີ ສິດ ແລະ ໜ້າທີ່ ປະສານສົມທົບ ແລະ ຮ່ວມມືກັບຂະແໜງການໂຍທາທິການ ແລະ ຂົນສົ່ງໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາການຜັງເມືອງ

**ມາດຕາ 82 (ປັບປຸງ) ອົງການກວດກາການຜັງເມືອງ**

ອົງການກວດກາການຜັງເມືອງ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງການຜັງເມືອງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 76 ຂອງກົດໝາຍສະບັບນີ້;
2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດຖະບານ, ອົງການກວດກາລັດແຕ່ລະຂັ້ນ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ສື່ມວນຊົນ.

**ມາດຕາ 83 (ປັບປຸງ) ເນື້ອໃນການກວດກາ**

ການກວດກາການຜັງເມືອງ ມີ ເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ, ແຜນການລົງທຶນກ່ຽວກັບການຜັງເມືອງ;
2. ປະເພດ, ເນື້ອໃນ, ກໍານົດໝາຍ ແລະ ມາດຕະຖານເຕັກນິກໃນການສໍາຫຼວດ-ອອກແບບແຜນຜັງຕົວເມືອງ;
3. ການປະມູນ, ສັນຍາກ່ຽວກັບການສໍາຫຼວດ-ອອກແບບແຜນຜັງຕົວເມືອງ;
4. ຄວາມຖືກຕ້ອງຂອງການນໍາໃຊ້ທີ່ດິນ, ເສັ້ນແຖວປຸກສ້າງ, ຮູບຊົງສະຖາປັດຕະຍະກໍາໃຫ້ສອດຄ່ອງກັບແຜນຜັງຕົວເມືອງ;
5. ການພັດທະນາໂຄງລ່າງພື້ນຖານທາງດ້ານເຕັກນິກ ແລະ ສັງຄົມຂອງຕົວເມືອງ.

**ມາດຕາ 84 (ໃໝ່) ຮູບການການກວດກາ**

ການກວດກາ ມີ ສາມຮູບການ ດັ່ງນີ້:

1. ການກວດກາຢ່າງເປັນລະບົບປົກກະຕິ ຊຶ່ງແມ່ນ ການກວດກາທີ່ດໍາເນີນໄປຕາມແຜນການຢ່າງເປັນປະຈໍາ ແລະ ມີກໍານົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຊາບລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາໂດຍຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ໃນການດຳເນີນການກວດກາການຜັງເມືອງນັ້ນເຈົ້າໜ້າທີ່ຜັງເມືອງ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ.

### ມາດຕາ 85 (ປັບປຸງ) ສິດ ແລະ ໜ້າທີ່ຂອງອົງການກວດກາ

ໃນການກວດກາການຜັງເມືອງອົງການກວດກາ ມີ ສິດ ແລະ ໜ້າທີ່ ປະຕິບັດຕາມເນື້ອໃນ ແລະ ຮູບການທີ່ໄດ້ກຳນົດໄວ້ໃນມາດຕາ 83 ແລະ 84 ຂອງກົດໝາຍສະບັບນີ້.

### ມາດຕາ 86 (ໃໝ່) ເຈົ້າໜ້າທີ່ຜັງເມືອງ

ເຈົ້າໜ້າທີ່ຜັງເມືອງ ແມ່ນ ພະນັກງານຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ ສຳລັບຂັ້ນສູນກາງ ຕາມການສະເໜີຂອງກົມເຄຫາ ແລະ ຜັງເມືອງ ແລະ ໂດຍເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ສຳລັບຂັ້ນແຂວງ ຕາມການສະເໜີຂອງພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ນະຄອນຫຼວງ.

ເຈົ້າໜ້າທີ່ຜັງເມືອງມີເຄື່ອງແບບ ແລະ ເຄື່ອງໝາຍສະເພາະ ໃນເວລາປະຕິບັດໜ້າທີ່.

### ມາດຕາ 87 (ໃໝ່) ມາດຕະຖານຂອງເຈົ້າໜ້າທີ່ຜັງເມືອງ

ເຈົ້າໜ້າທີ່ຜັງເມືອງຕ້ອງ ມີ ມາດຕະຖານຕົ້ນຕໍ ດັ່ງນີ້:

1. ກຳແໜ້ນແນວທາງ ນະໂຍບາຍ, ກົດໝາຍ ແລະ ລະບຽບການກ່ຽວກັບການຜັງເມືອງ;
2. ມີທັດສະນະຫຼັກໝັ້ນ, ມີຄຸນສົມບັດສິນທຳປະຕິວັດ ແລະ ຈັນຍາບັນດ້ານວິຊາຊີບ;
3. ມີວິຊາສະເພາະກ່ຽວກັບການຜັງເມືອງ ແຕ່ຊັ້ນສູງຂຶ້ນໄປ, ມີຄວາມຮູ້, ຄວາມສາມາດ ແລະ ປະສົບການດ້ານການຜັງເມືອງຢ່າງໜ້ອຍ ສາມປີ;
4. ມີສັນຊາດລາວໂດຍກຳເນີດ ແລະ ບໍ່ເຄີຍຖືກລົງວິໄນ ຫຼື ຖືກລົງໂທດ ຍ້ອນການກະທຳຜິດໂດຍເຈດຕະນາ;
5. ມີສຸຂະພາບດີ.

### ມາດຕາ 88 (ໃໝ່) ສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ຜັງເມືອງ

ເຈົ້າໜ້າທີ່ຜັງເມືອງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຕິດຕາມ, ກວດກາ ແລະ ຄວບຄຸມສະພາບຂອງຕົວເມືອງຢ່າງເປັນປົກກະຕິ ແລະ ແກ້ໄຂຢ່າງທັນການໃນກໍລະນີການປຸກສ້າງ, ການຂຸດດິນ, ການຖົມດິນ ບໍ່ສອດຄ່ອງກັບລະບຽບການນຳໃຊ້ທີ່ດິນ;
2. ເກັບກຳ, ສະໜອງຂໍ້ມູນ, ຫຼັກຖານ ແລ້ວສະເໜີຂະແໜງການທີ່ກ່ຽວຂ້ອງພິຈາລະນາແກ້ໄຂຕາມກົດໝາຍ;

3. ພົວພັນ ແລະ ປະສານສົມທົບກັບການຈັດຕັ້ງອື່ນທີ່ກ່ຽວຂ້ອງ ລວມທັງອົງການປົກຄອງທ້ອງຖິ່ນໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຕົນ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ VIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 89 (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການປະກອບສ່ວນເຂົ້າໃນການຜັງເມືອງ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 90 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ແລ້ວແຕ່ກໍລະນີ ເບົາ ຫຼື ໜັກ.

### ມາດຕາ 91 (ປັບປຸງ) ມາດຕະການສຶກສາອົບຮົມ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ທີ່ມີລັກສະນະເບົາ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ.

### ມາດຕາ 92 (ປັບປຸງ) ມາດຕະການທາງວິໄນ

ພະນັກງານ, ເຈົ້າໜ້າທີ່ຜັງເມືອງ ຫຼື ເຈົ້າໜ້າທີ່ອື່ນ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມທີ່ມີລັກສະນະເບົາ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ, ກໍ່ຄວາມເສຍຫາຍບໍ່ຫຼວງຫຼາຍ ແລະ ບໍ່ຈິງໃຈລາຍງານ, ຄວາມຜິດຂອງຕົນຈະຖືກລົງວິໄນຕາມກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ.

### ມາດຕາ 93 (ປັບປຸງ) ມາດຕະການປັບໃໝ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ແລະ ກໍ່ຄວາມເສຍຫາຍ ຊຶ່ງບໍ່ມີອົງປະກອບຂອງການກະທຳຜິດທາງອາຍາ ຈະຖືກປັບໃໝໃນກໍລະນີ ດັ່ງນີ້:

1. ດຳເນີນທຸລະກິດກ່ຽວກັບການຜັງເມືອງ ໂດຍບໍ່ໄດ້ຮັບອະນຸຍາດ ແລະ ບໍ່ປະຕິບັດຕາມປະເພດ, ຂັ້ນຕອນ, ເນື້ອໃນ, ກຳນົດໝາຍ ຫຼື ມາດຕະຖານເຕັກນິກຜັງເມືອງ;

2. ປຸກສ້າງ ຫຼື ກໍ່ສ້າງໂດຍບໍ່ໄດ້ຮັບອະນຸຍາດ ຫຼື ສິ່ງຜົນກະທົບ ທາງລົບຕໍ່ສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ;

3. ນຳໃຊ້ທີ່ດິນ ໂດຍບໍ່ຖືກຕ້ອງຕາມແຜນຜັງເມືອງ;

4. ມີການລະເມີດກໍລະນີອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;

ສຳລັບອັດຕາປັບໃໝ ໃນແຕ່ລະກໍລະນີ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 94 (ໃໝ່) ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍຕໍ່ຊັບສິນຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ຕ້ອງໃຊ້ແທນຄ່າເສຍຫາຍຕາມທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 95 (ໃໝ່) ມາດຕະການທາງອາຍາ**

ບຸກຄົນ, ນິຕິບຸກຄົນ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາ ຈະຖືກລົງໂທດຕາມແຕ່ລະກໍລະນີ ເບົາ ຫຼື ໜັກ.

**ມາດຕາ 96 (ໃໝ່) ມາດຕະການໂທດເພີ່ມ**

ນອກຈາກໂທດທີ່ໄດ້ກຳນົດໄວ້ໃນມາດຕາ 95 ຂອງກົດໝາຍສະບັບນີ້ ຜູ້ກະທຳຜິດຍັງຈະຖືກປະຕິບັດມາດຕະການໂທດເພີ່ມອີກ ເຊັ່ນ ໃຫ້ຮື້ຖອນສິ່ງປຸກສ້າງ ຫຼື ສິ່ງກໍ່ສ້າງ, ໂຈະ ຫຼື ຖອນໃບອະນຸຍາດປຸກສ້າງ ຫຼື ກໍ່ສ້າງ.

## ພາກທີ IX
## ບົດບັນຍັດສຸດທ້າຍ

**ມາດຕາ 97 (ປັບປຸງ) ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 98 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍຜັງເມືອງ ສະບັບເລກທີ03/99/ສພຊ, ລົງວັນທີ 3 ເມສາ 1999.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້